**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ: 1858/ກປ

ນະຄອນຫຼວງວຽງຈັນ, ວັນທີ: 24 MAR 2023

# ຂໍ້ຕົກລົງ
# ວ່າດ້ວຍການກວດກາ ແລະ ການດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມກວດກາປ່າໄມ້ ສະບັບເລກທີ 0029 /ກກປມ, ລົງວັນທີ 11 ມັງກອນ 2023.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ວິທີການ ແລະ ຂັ້ນຕອນ ໃນການກວດກາ ແລະ ດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ປ່າໄມ້ ສາມາດເຄື່ອນໄຫວວຽກງານ ການກວດກາ ແລະ ດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ ຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ຮັບປະກັນ ການຈັດຕັ້ງປະຕິບັດກົດໝາຍ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດ.

### ມາດຕາ 2 ການກວດກາ ແລະ ການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້

ການກວດກາຊັບພະຍາກອນປ່າໄມ້ ແມ່ນການຕິດຕາມ ກວດກາ ການຄຸ້ມຄອງ, ການພັດທະນາ, ການນຳໃຊ້ໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ລວມທັງ ການດຳເນີນທຸລະກິດ ກ່ຽວກັບ ຊັບພະຍາກອນປ່າໄມ້.

ຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ແມ່ນ ຄະດີ ກ່ຽວກັບ ການກະທຳຜິດ ຫຼື ການເມີນເສີຍ ທີ່ສ້າງຄວາມເສຍຫາຍ ຕໍ່ຊັບພະຍາກອນປ່າໄມ້ ທີ່ມີຄວາມຜິດ ຊຶ່ງບົ່ງໄວ້ໃນປະມວນກົດໝາຍອາຍາ, ກົດໝາຍ ວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ທີ່ໄດ້ກຳນົດໂທດທາງອາຍາ.

ການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ແມ່ນ ການເຄື່ອນໄຫວຂອງ ອົງການສືບສວນ-ສອບສວນ ຂອງ ເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນ ເພື່ອຊອກໃຫ້ເຫັນການກະທຳຜິດ ທາງອາຍາ ທີ່ກ່ຽວພັນກັບ ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດ ມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປ່າໄມ້** ໝາຍເຖິງ ຊັບພະຍາກອນທຳມະຊາດອັນລ້ຳຄ່າ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍ ຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້ ໂດຍມີຕົ້ນໄມ້ນາໆຊະນິດ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
2. **ຊັບພະຍາກອນປ່າໄມ້** ໝາຍເຖິງ ຊັບພະຍາກອນຕ່າງໆທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆ ທີ່ມີຢູ່ໃນເຂດທີ່ດິນປ່າໄມ້;
3. **ທີ່ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດ ໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;
4. **ເຄື່ອງປ່າຂອງດົງ** ໝາຍເຖິງ ພືດ ທີ່ເກີດຂຶ້ນຢູ່ຕາມທຳມະຊາດ ຫຼື ປູກຂຶ້ນ ຊຶ່ງລວມມີ ປະເພດ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງ, ເຫັດ, ນ້ຳເຜິ້ງ ລວມທັງພືດເປັນຢາ ແລະ ອື່ນໆ;
5. **ສັດນ້ຳ** ແມ່ນ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳ ທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດມາລ້ຽງ ເຊັ່ນ ປາຂ່າ, ປາບຶກ, ປາເຄິງ ແລະ ອື່ນໆ;
6. **ສັດປ່າ** ແມ່ນ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນປ່າທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດມາລ້ຽງ ເຊັ່ນ ຊ້າງ, ເສືອ, ໝີ, ກວາງ, ຟານ, ລີງ, ງູ, ນົກ ແລະ ອື່ນໆ;
7. **ເຈົ້າໜ້າທີ່ປ່າໄມ້** ໝາຍເຖິງ ພະນັກງານ ສັງກັດຢູ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;
8. **ການສືບສວນ-ສອບສວນ** ໝາຍເຖິງ ການຊອກຫາ ແລະ ການເກັບກຳຂໍ້ມູນ, ຫຼັກຖານ;
9. **ການກະທຳຜິດກົດໝາຍ** ແມ່ນ ການກະທຳຜິດ ຫຼື ເມີນເສີຍ ທີ່ເປັນອັນຕະລາຍຕໍ່ປ່າໄມ້, ສັດນ້ຳ ແລະ ສັດປ່າ, ເຄື່ອງປ່າຂອງດົງ ທີ່ເປັນຊັບພະຍາກອນອັນລ້ຳຄ່າຂອງ ສປປ ລາວ;
10. **ອາຊະຍາກຳຂ້າມຊາດ ກ່ຽວກັບ ຊັບພະຍາກອນປ່າໄມ້** ແມ່ນ ການກະທຳຜິດກົດໝາຍ ຂອງ ສປປ ລາວ ຫຼື ກົດໝາຍ ຂອງປະເທດອື່ນ ຫຼື ລະບຽບການ ຂອງອົງການ CITES ໂດຍພົນລະເມືອງລາວ ຫຼື ຊາວຕ່າງປະເທດ;
11. **ການລະເມີດກົດໝາຍ** ແມ່ນພຶດຕິກຳຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ລະເມີດກົດໝາຍ ຂອງ ສປປ ລາວ ໂດຍທີ່ສານຍັງບໍ່ທັນໄດ້ມີຄຳຕັດສິນລົງໂທດ;
12. **ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ** ແມ່ນ ການນຳເອົາວັດຖຸສິ່ງຂອງ, ເອກະສານ ແລະ ວັດຖຸເງິນຄຳທີ່ມີຄ່າ ຊຶ່ງໄດ້ມາໂດຍຜິດກົດໝາຍ ເພື່ອມາເປັນຫຼັກຖານໃນຄະດີ;
13. **ການຊັນນະສູດສະຖານທີ່ເກີດເຫດ** ແມ່ນ ການກວດກາ, ການເກັບກຳ, ທ້ອນໂຮມ ຂໍ້ມູນຫຼັກຖານ ແລະ ຮ່ອງຮອຍຂອງການກະທຳຜິດ;
14. **ນິຕິທຳ** ໝາຍເຖິງ ອົງການ, ເຈົ້າໜ້າທີ່ ຜູ້ເຂົ້າຮ່ວມ ທີ່ມີສິດ ແລະ ໜ້າທີ່ ກ່ຽວຂ້ອງໃນການດຳເນີນຄະດີອາຍາ ຕ້ອງເຄົາລົບ, ປະຕິບັດກົດໝາຍ ແລະ ຄຳຕົກລົງຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຢ່າງເຂັ້ມງວດ;
15. **ການບຸກລຸກທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນ, ການບຸກຍຶດ, ການຈັບຈອງ, ການນຳໃຊ້ ແລະ ການກະທຳອື່ນຕໍ່ ທີ່ດິນປ່າໄມ້ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
16. **ການຫັນປ່ຽນທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ ໄປເປັນທີ່ດິນ ປະເພດອື່ນ ແລະ ຈຸດປະສົງອື່ນ;
17. **ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້** ໝາຍເຖິງ ການນຳໃຊ້ທີ່ດິນປ່າໄມ້ ເພື່ອດຳເນີນທຸລະກິດປ່າໄມ້ ເຊັ່ນ ການຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ, ການທ່ອງທ່ຽວທຳມະຊາດ, ການຂຸດຄົ້ນແຮ່ທາດ, ການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ ແລະ ການບໍລິການດ້ານລະບົບນິເວດປ່າໄມ້;

18. **ຖ່ານດຳ** ໝາຍເຖິງ ຖ່ານທີ່ຜະລິດຈາກໄມ້ ຫຼື ຂີ້ເລື່ອຍ ທີ່ເຜົາດ້ວຍໄຟ ທີ່ມີອຸນຫະພູມ ບໍ່ເກີນ 1.000 ອົງສາເຊ ມີຄຸນລັກສະນະບໍ່ແຂງແກ່ນ, ເວລາຈູດຈະມີຄວັນດຳຫຼາຍ;
19. **ຖ່ານຂາວ** ໝາຍເຖິງ ຖ່ານທີ່ຜະລິດຈາກໄມ້ດິບ ທີ່ໃຊ້ເຕັກນິກການເຜົາດ້ວຍອຸນຫະພູມສູງແຕ່ 1.000 ອົງສາເຊ ຂຶ້ນໄປ ມີຄຸນລັກສະນະແຂງແກ່ນ, ເວລາຈູດຈະບໍ່ມີຄວັນດຳຫຼາຍ.

**ມາດຕາ 4 (ປັບປຸງ) ຫຼັກການລວມ ໃນການກວດກາ ແລະ ດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້**

ໃນການກວດກາ ແລະ ດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຫຼັກການລວມ ໃນການກວດກາ ຊັບພະຍາກອນປ່າໄມ້;
   1) ປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
   2) ຮັບປະກັນຄວາມສະເໝີພາບ ຍິງ-ຊາຍ;
   3) ຄະນະທີມງານກວດກາ ແຕ່ລະຄັ້ງ ຕ້ອງປະກອບມີ ເຈົ້າໜ້າທີ່ ຢ່າງໜ້ອຍ 03 ຄົນຂຶ້ນໄປ ແລະ ຕ້ອງນຸ່ງເຄື່ອງແບບເຈົ້າໜ້າທີ່ ໂດຍໄດ້ຮັບການແຕ່ງຕັ້ງ ຫຼື ມອບໝາຍຈາກການຈັດຕັ້ງ;
   4) ການກວດກາໃຫ້ກວດກາທາງດ້ານເອກະສານ ແລະ ສົມທຽບກັບຂໍ້ມູນ ກ່ຽວກັບ ຊັບພະຍາກອນ ປ່າໄມ້ຕົວຈິງ;
   5) ການກວດກາແຕ່ລະຄັ້ງຕ້ອງ ສ້າງບົດບັນທຶກໄວ້ເພື່ອເປັນຫຼັກຖານ.

2. ຫຼັກການລວມ ໃນການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້;
   1) ນິຕິທຳ;
   2) ຮັບປະກັນຄວາມສະເໝີພາບ ຍິງ-ຊາຍ;
   3) ການບໍ່ໃຫ້ລ່ວງລະເມີດ ສິດ ແລະ ເສລີພາບຂອງພົນລະເມືອງ;
   4) ຄວາມສະເໝີພາບຂອງພົນລະເມືອງ ຕໍ່ໜ້າກົດໝາຍ;
   5) ການຮັບປະກັນສິດ ໃນການຕໍ່ສູ້ຄະດີ;
   6) ການສັນນິຖານວ່າ ເປັນຜູ້ບໍລິສຸດ;
   7) ພາສາທີ່ໃຊ້ໃນການດຳເນີນຄະດີ;
   8) ການໄຕ່ສວນຄະດີ ຢ່າງເປີດເຜີຍ;
   9) ການດຳເນີນຄະດີ ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະ ຍຸຕິທຳ;
   10) ການຮັບປະກັນສິດໃນການຮ້ອງທຸກ;
   11) ການປະສານສົມທົບ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບເຈົ້າໜ້າທີ່ປ່າໄມ້ ໃນການເຄື່ອນໄຫວວຽກງານກວດກາ ແລະ ການດຳເນີນຄະດີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກະທຳຜິດກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ.

## ໝວດທີ 2
## ການກວດກາ ໄມ້ ແລະ ຜະລິດຕະພັນໄມ້

**ມາດຕາ 6 ການກວດກາ ການສຳຫຼວດເພື່ອຂຸດຄົ້ນໄມ້ ໃນເຂດປ່າຜະລິດ**

ການກວດກາ ການສຳຫຼວດເພື່ອຂຸດຄົ້ນໄມ້ ໃນເຂດປ່າຜະລິດ ໃຫ້ກວດກາດັ່ງນີ້:

1. ຂໍ້ຕົກລົງ ແຕ່ງຕັ້ງວິຊາການ ລົງສຳຫຼວດຈາກຂະແໜງການກະສິກຳ ແລະ ປ່າໄມ້ ຕາມສິດຂອບເຂດ ຂອງແຕ່ລະຂັ້ນ;

2. ການສຳຫຼວດ ແລະ ຂຶ້ນບັນຊີໄມ້ຢືນຕົ້ນທຸກຊະນິດ ທີ່ມີຂະໜາດວັດຮອບອະນຸຍາດໃຫ້ຕັດຟັນ, ບໍລິມາດໄມ້, ຈຸດຢືນຂອງຕົ້ນໄມ້ ສົມທຽບໃສ່ບັນຊີ ແລະ ແຜນທີ່ ທີ່ກຳນົດໄວ້;
3. ການຄັດເລືອກ, ການໝາຍ, ຕີຕາໝາຍຕົ້ນໄມ້ທີ່ຈະຕັດ, ການກຳນົດທິດທາງໄມ້ລົ້ມ ເພື່ອຮັບປະກັນການສືບພັນ ແລະ ປ້ອງກັນຜົນກະທົບ ຕໍ່ສິ່ງແວດລ້ອມ;
4. ການກຳນົດເສັ້ນທາງຂຸດຄົ້ນໄມ້, ລາກແກ່ ແລະ ຈຸດທ້ອນໂຮມໄມ້ທ່ອນ ຫຼື ສະໜາມ I;
5. ການສ້າງແຜນຂຸດຄົ້ນໄມ້.

**ມາດຕາ 7 (ປັບປຸງ) ການກວດກາ ການສຳຫຼວດເພື່ອຂຸດຄົ້ນໄມ້ ໃນເຂດທັນປຽນທີ່ດິນປ່າໄມ້**

ການກວດກາ ການສຳຫຼວດເພື່ອຂຸດຄົ້ນໄມ້ ໃນເຂດທັນປຽນທີ່ດິນປ່າໄມ້ ໃຫ້ກວດກາ ດັ່ງນີ້:

1. ຂໍ້ຕົກລົງ ແຕ່ງຕັ້ງວິຊາການ ລົງສຳຫຼວດ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຕາມສິດຂອບເຂດ ຂອງແຕ່ລະຂັ້ນ;
2. ເອກະສານ ທີ່ລັດຖະບານອະນຸຍາດ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ເຊົ່າ ຫຼື ສຳປະທານ;
3. ການໝາຍຂອບເຂດ ແລະ ເສັ້ນລະດັບ ບ່ອນຈະຂຸດຄົ້ນໄມ້ ຕາມການອະນຸຍາດ;
4. ການສຳຫຼວດ ເກັບກຳຂໍ້ມູນຊະນິດໄມ້, ຈຳນວນໄມ້ ຢືນຕົ້ນ ແລະ ການຄິດໄລ່ບໍລິມາດໄມ້;
5. ບົດລາຍງານ ຜົນການສຳຫຼວດ.

**ມາດຕາ 8 (ປັບປຸງ) ການກວດກາ ການຂຸດຄົ້ນໄມ້ ໃນເຂດປ່າຜະລິດ**

ການກວດກາ ການຂຸດຄົ້ນໄມ້ ໃນເຂດປ່າຜະລິດ ໃຫ້ກວດກາ ດັ່ງນີ້:

1. ແຜນການຂຸດຄົ້ນໄມ້ ປະຈຳປີ ທີ່ລັດຖະບານອະນຸມັດ;
2. ໃບອະນຸຍາດຂຸດຄົ້ນໄມ້;
3. ການປະຕິບັດສັນຍາການຂຸດຄົ້ນໄມ້;
4. ການຄຸ້ມຄອງ, ນຳໃຊ້ເຄື່ອງຈັກ ແລະ ພາຫະນະລາກແກ່;
5. ຂອບເຂດຂຸດຄົ້ນໄມ້;
6. ການຕັດໄມ້ ຕາມການໝາຍຕົ້ນໃຫ້ຕັດ ການແນະນຳຂອງວິຊາການ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
7. ການຊັກລາກ, ການຂົນສົ່ງ, ການທ້ອນໂຮມໄມ້ ໃຫ້ໄປຕາມເສັ້ນທາງ ທີ່ກຳນົດໄວ້;
8. ການອະນາໄມ ສິ່ງເສດເຫຼືອ ຫຼັງການຂຸດຄົ້ນໄມ້;
9. ການປະຕິບັດມາດຕະການ ການປິດປ່າ ເພື່ອຟື້ນຟູ ແລະ ບູລະນະ ຫຼັງການຂຸດຄົ້ນ;
10. ການປະຕິບັດໜ້າທີ່ພາລະບົດບາດ ຂອງພະນັກງານ ປະຈຳພາກສະໜາມ.

**ມາດຕາ 9 ການກວດກາ ການຂຸດຄົ້ນໄມ້ ໃນເຂດທັນປຽນທີ່ດິນປ່າໄມ້**

ໃຫ້ດຳເນີນການກວດກາ ຕາມມາດຕາ 8, ຂໍ້ທີ 1, 2, 3, 4, 5, 7, 10 ຂອງຂໍ້ຕົກລົງສະບັບນີ້ ແລະ ກວດກາ ການຕັດໄມ້ ຕາມການໝາຍຕົ້ນໃຫ້ຕັດ, ກວດກາ ການແນະນຳຂອງວິຊາການ, ກວດກາ ການລາກແກ່ໄມ້ ຕາມເສັ້ນທາງເຂົ້າໄປຫາອ່າງເກັບນ້ຳ, ຕາມເສັ້ນທາງເຂົ້າໄປຫາແລວທາງ ແລະ ແລວສາຍໄຟ, ກວດກາ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 10 ການກວດກາ ການຂຸດຄົ້ນໄມ້ທຳມະຊາດ ທີ່ເກີດໃນດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ການກວດກາ ການຂຸດຄົ້ນໄມ້ທຳມະຊາດ ທີ່ເກີດໃນດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ, ໃບຢັ້ງຢືນສິດຄອບຄອງ ແລະ ນຳໃຊ້ທີ່ດິນ;
2. ໃບຢັ້ງຢືນຕົ້ນໄມ້ທຳມະຊາດ (ຕ້ອງມີອາຍຸຢ່າງໜ້ອຍ 06 ເດືອນຂຶ້ນໄປ);

3. ຂໍ້ມູນໄມ້ທີ່ຈະຕັດ ຫຼື ບັນຊີໄມ້ຢືນຕົ້ນ ທີ່ຈະຕັດ;
4. ໃບອະນຸຍາດຂຸດຄົ້ນໄມ້ບັນຊີ I ຫຼື ບັນຊີ II ແລະ III;
5. ບັນຊີໄມ້ທ່ອນ.

**ມາດຕາ 11 (ປັບປຸງ) ການກວດກາໄມ້ຢູ່ສະໜາມ I**

ການກວດກາໄມ້ຢູ່ສະໜາມ I ໃຫ້ປະຕິບັດ ດັ່ງນີ້:

1. ແຜນການອະນຸມັດ ຂຸດຄົ້ນໄມ້;
2. ໃບອະນຸຍາດຂຸດຄົ້ນໄມ້;
3. ສັນຍາການຂຸດຄົ້ນໄມ້;
4. ບັນຊີຕັດປ້ຳ ສົມທຽບໃສ່ ບັນຊີສຳຫຼວດໝາຍຕົ້ນຕັດ;
5. ຈຸດທ້ອນໂຮມໄມ້ທ່ອນ ຢູ່ສະໜາມ I.

**ມາດຕາ 12 (ປັບປຸງ) ການກວດກາໄມ້ຢູ່ສະໜາມ II**

ການກວດກາໄມ້ຢູ່ສະໜາມ II ໃຫ້ປະຕິບັດ ດັ່ງນີ້:

1. ການກຳນົດສະໜາມ II;
2. ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້;
3. ໃບນຳສົ່ງໄມ້ ສະໜາມ I ຫາ ສະໜາມ II;
4. ບັນຊີໄມ້ ສົມທຽບໃສ່ໄມ້ຕົວຈິງ ສົມທຽບໃສ່ ໃບອະນຸຍາດຂຸດຄົ້ນ ແລະ ບັນຊີສຳຫຼວດໝາຍຕົ້ນຕັດ.

**ມາດຕາ 13 ການກວດກາໄມ້ຢູ່ສະໜາມ III**

ການກວດກາໄມ້ຢູ່ສະໜາມ III ໃຫ້ປະຕິບັດ ດັ່ງນີ້:

1. ແຫຼ່ງທີ່ມາຂອງໄມ້, ບັນຊີໄມ້ທີ່ໄດ້ເຄື່ອນຍ້າຍເຂົ້າສະໜາມ III;
2. ສັນຍາການຊື້-ຂາຍໄມ້;
3. ການມອບ-ຮັບ ບັນຊີໄມ້;
4. ໃບຢັ້ງຢືນການມອບພັນທະໄມ້;
5. ໃບອະນຸຍາດເຄື່ອນຍ້າຍໄມ້;
6. ໃບນຳສົ່ງໄມ້ທ່ອນ ສະໜາມ II ຫາ ສະໜາມ III;
7. ຮອຍຄ້ອນຕີຕາ ປມ.

**ມາດຕາ 14 ການກວດກາ ການເຄື່ອນຍ້າຍຕໍໄມ້, ໄມ້ທ່ອນ, ປູດໄມ້ ແລະ ໄມ້ເລື່ອຍ ພາຍໃນ**

ການກວດກາ ການເຄື່ອນຍ້າຍຕໍໄມ້, ໄມ້ທ່ອນ, ປູດໄມ້ ແລະ ໄມ້ເລື່ອຍ ພາຍໃນ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດເຄື່ອນຍ້າຍໄມ້ພາຍໃນ;
2. ບັນຊີໄມ້ໃນເອກະສານ ສົມທຽບໃສ່ໄມ້ຕົວຈິງ;
3. ໃບບິນປ່ອຍໄມ້ແຕ່ລະຄັນລົດ;
4. ສັນຍາຊື້-ຂາຍໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ໄມ້ເລື່ອຍ;
5. ໃບແຈ້ງລາຄາເສຍພັນທະໄມ້;
6. ໃບຢັ້ງຢືນການມອບພັນທະໄມ້;
7. ຮອຍຄ້ອນຕີຕາ ປມ.

**ມາດຕາ 15 ການກວດກາ ການເຄື່ອນຍ້າຍ ຜະລິດຕະພັນໄມ້ ພາຍໃນ**

ການກວດກາ ການເຄື່ອນຍ້າຍ ຜະລິດຕະພັນໄມ້ ພາຍໃນ ໃຫ້ປະຕິບັດ ດັ່ງນີ້:

1. ເອກະສານຢັ້ງຢືນຂອງພາກສ່ວນທີ່ກ່ຽວຂ້ອງ;
2. ເອກະສານຢັ້ງຢືນຄວາມຖືກຕ້ອງແຫຼ່ງທີ່ມາຂອງໄມ້;
3. ໃບຢັ້ງຢືນການມອບພັນທະ, ອາກອນ;
4. ລາຍການຜະລິດຕະພັນໄມ້.

**ມາດຕາ 16 ການກວດກາ ການເຄື່ອນຍ້າຍຕົ້ນໄມ້ທຳມະຊາດ, ໄມ້ຟືນ, ໄມ້ຄ້ຳແບບ, ໄມ້ຫຼັກຮື້ອ ແລະ ຖ່ານ ພາຍໃນ**

ການກວດກາ ການເຄື່ອນຍ້າຍຕົ້ນໄມ້ທຳມະຊາດ, ໄມ້ຟືນ, ໄມ້ຄ້ຳແບບ, ໄມ້ຫຼັກຮື້ອ ແລະ ຖ່ານ ພາຍໃນ ໃຫ້ປະຕິບັດ ດັ່ງນີ້:

1. ກໍລະນີໄມ້ທຳມະຊາດ
   - ໃບອະນຸມັດຂຸດຄົ້ນໄມ້;
   - ໃບອະນຸຍາດເຄື່ອນຍ້າຍໄມ້ພາຍໃນ;
   - ໃບຢັ້ງຢືນການມອບພັນທະໄມ້;
   - ສົມທຽບຈຳນວນທີ່ລະບຸໃນໃບເຄື່ອນຍ້າຍ ໃສ່ຈຳນວນຕົວຈິງ.
2. ກໍລະນີໄມ້ປູກ ແມ່ນໃຫ້ກວດກາໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກເທົ່ານັ້ນ

**ມາດຕາ 17 ການກວດກາ ການເຄື່ອນຍ້າຍໄມ້ທຳມະຊາດ ທີ່ເກີດໃນດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ການກວດກາ ການເຄື່ອນຍ້າຍໄມ້ທຳມະຊາດ ທີ່ເກີດໃນດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດເຄື່ອນຍ້າຍໄມ້ ພາຍໃນ;
2. ບົດບັນທຶກການກວດກາ, ວັດແທກຂຶ້ນບັນຊີໄມ້;
3. ໃບບິນປ່ອຍໄມ້ແຕ່ລະຄັນລົດ;
4. ໃບຢັ້ງຢືນ ການເສຍອາກອນ (ກໍລະນີນຳໃຊ້ເພື່ອທຸລະກິດ);
5. ໃບຢັ້ງຢືນຕົ້ນໄມ້ທຳມະຊາດ (ຕ້ອງມີອາຍຸຢ່າງໜ້ອຍ 06 ເດືອນຂຶ້ນໄປ);
6. ບັນຊີໄມ້ໃນເອກະສານ ສົມທຽບໃສ່ໄມ້ຕົວຈິງ.
7. ຮອຍຄ້ອນຕີຕາ ປມ.

**ມາດຕາ 18 (ປັບປຸງ) ການກວດກາ ການສົ່ງອອກໄມ້ ຫຼື ຜະລິດຕະພັນໄມ້**

ການກວດກາ ການສົ່ງອອກໄມ້ ຫຼື ຜະລິດຕະພັນໄມ້ ໄປຕ່າງປະເທດ ໃຫ້ປະຕິບັດ ດັ່ງນີ້:

1. ກໍລະນີໄມ້ທຳມະຊາດ
   - ເອກະສານຢັ້ງຢືນແຫຼ່ງທີ່ມາຂອງໄມ້ ຫຼື ຜະລິດຕະພັນໄມ້;
   - ໃບຢັ້ງຢືນຄວາມຖືກຕ້ອງຂອງໄມ້ ຫຼື ຜະລິດຕະພັນໄມ້;
   - ໃບຢັ້ງຢືນການຊຳລະຄ່າພັນທະ, ອາກອນ (ສຳລັບໄມ້ທີ່ເກີດໃນດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແມ່ນບໍ່ໄດ້ເສຍຄ່າພັນທະ);
   - ໃບແຈ້ງລາຄາສິນຄ້າ (Invoice and Packing List);
   - ໃບອະນຸຍາດ ໄມ້ທຳມະຊາດເພື່ອສົ່ງອອກ;
   - ບົດບັນທຶກການກວດກາໄມ້ ຫຼື ຜະລິດຕະພັນໄມ້ທຳມະຊາດເພື່ອສົ່ງອອກ.

- ສົມທຽບຈຳນວນບໍລິມາດໄມ້, ຊະນິດໄມ້, ຜະລິດຕະພັນໄມ້ ທີ່ລະບຸໃນເອກະສານ ແລະ ໄມ້ຕົວຈິງ;
- ສົມທຽບ ປະເພດ, ສີ, ຍີ່ຫໍ້, ທະບຽນ ຂອງພາຫະນະຂົນສົ່ງ ທີ່ກຳນົດໃນເອກະສານ ສົມທຽບໃສ່ລົດຕົວຈິງ;
- ສ້າງບົດບັນທຶກການກວດກາ ຕົວຈິງ.

2. ກໍລະນີໄມ້ປູກ
   - ໃບອະນຸຍາດດຳເນີນທຸລະກິດສຳລັບຜູ້ສົ່ງອອກ;ໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ;
   - ບັນຊີໄມ້ທີ່ສົ່ງອອກ;
   - ໃບຢັ້ງຢືນ ການເສຍອາກອນ;
   - ສັນຍາຊື້ຂາຍໄມ້;
   - ໃບອະນຸຍາດສົ່ງອອກ.

**ມາດຕາ 19 ການກວດກາ ການນຳເຂົ້າ ແລະ ສົ່ງຜ່ານໄມ້ ແລະ ຜະລິດຕະພັນໄມ້**

ການກວດກາ ການນຳເຂົ້າ ແລະ ສົ່ງຜ່ານໄມ້ ແລະ ຜະລິດຕະພັນໄມ້ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດສົ່ງອອກ ຫຼື ສົ່ງຜ່ານ ໄມ້ ແລະ ຜະລິດຕະພັນໄມ້ ຈາກກະຊວງກ່ຽວຂ້ອງ ຂອງປະເທດຕົ້ນທາງ;
2. ໃບຄຳຮ້ອງຂໍນຳເຂົ້າ ຫຼື ສົ່ງຜ່ານ ໄມ້ ແລະ ຜະລິດຕະພັນໄມ້ ຂອງບໍລິສັດ;
3. ສຳເນົາເອກະສານວິສາຫະກິດ ຫຼື ໃບທະບຽນສຳປະທານ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບ ວິສາຫະກິດ ທີ່ຢູ່ ສປປ ລາວ), ໃບທະບຽນ ວິສາຫະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ໃນ ສປປ ລາວ);
4. ບັນຊີໄມ້ ແລະ ຜະລິດຕະພັນໄມ້;
5. ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ແລະ ປາຍທາງ (ກໍລະນີ ໄມ້ນອນໃນບັນຊີ CITES);
6. ໃບອະນຸຍາດນຳເຂົ້າ ຫຼື ສົ່ງຜ່ານ ໄມ້ ແລະ ຜະລິດຕະພັນໄມ້.

**ມາດຕາ 20 (ໃໝ່) ການກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ກວດກາ ດັ່ງນີ້:

1. ໃບອະນຸຍາດສ້າງຕັ້ງໂຮງງານ ຫຼື ສັນຍາເຊົ່າໂຮງງານ;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ໃບອະນຸຍາດດຳເນີນກິດຈະການ ກະສິກຳ ແລະ ປ່າໄມ້;
4. ໃບທະບຽນວິສາຫະກິດ;
5. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
6. ໃບຢັ້ງຢືນ ດ້ານສິ່ງແວດລ້ອມ;
7. ໃບຢັ້ງຢືນ ມອບພັນທະ, ອາກອນ;
8. ກວດກາ ການຄຸ້ມຄອງ ແລະ ນຳໃຊ້ເຄື່ອງຈັກ.

(ໂຮງງານປຸງແຕ່ງໄມ້ແບບຄອບຄົວ ໃຫ້ກວດກາຕາມຂໍ້ທີ 1, 2, 3, 4, 7 ແລະ 8 ຂອງມາດຕານີ້)

**ມາດຕາ 21 (ໃໝ່) ການກວດກາ ຮ້ານຂາຍໄມ້ ແລະ ສາງເກັບມ້ຽນໄມ້**

ການກວດກາ ຮ້ານຂາຍໄມ້ ແລະ ສາງເກັບມ້ຽນໄມ້ ໃຫ້ກວດກາ ດັ່ງນີ້:

1. ໃບອະນຸຍາດສ້າງຕັ້ງ ຫຼື ສັນຍາເຊົ່າຮ້ານຂາຍໄມ້;
2. ໃບອະນຸຍາດດຳເນີນກິດຈະການ ກະສິກຳ ແລະ ປ່າໄມ້;

3. ໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນ ມອບພັນທະ, ອາກອນ.

**ມາດຕາ 22 (ປັບປຸງ) ການກວດກາໄມ້ ສົ້ນເຂົ້າ-ສົ້ນອອກ ຢູ່ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການກວດກາໄມ້ ສົ້ນເຂົ້າ-ສົ້ນອອກ ຢູ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການບັນທຶກໄມ້ ທີ່ນຳເຂົ້າມາໃນໂຮງງານປຸງແຕ່ງໄມ້:
   - ບັນຊີໄມ້ທ່ອນ, ໄມ້ແປຮູບ ທີ່ນຳເຂົ້າ;
   - ເອກະສານຢັ້ງຢືນແຫຼ່ງທີ່ມາຂອງໄມ້;
   - ເອກະສານຢັ້ງຢືນການເສຍຄ່າພັນທະ, ອາກອນຕ່າງໆ;
     - ຢັ້ງຢືນຄວາມຖືກຕ້ອງຂອງໄມ້ທ່ອນຄ້າງໂຮງງານ ໂດຍການສົມທຽບຈຳນວນ, ບໍລິມາດໄມ້, ຊະນິດໄມ້ ເຂົ້າໂຮງງານ ກັບບັນຊີໄມ້ເຂົ້າເລື່ອຍ ແລະ ບັນຊີໄມ້ຄ້າງ.
2. ການບັນທຶກໄມ້ ຄ້າງສາງ:
   - ບັນຊີລາຍການໄມ້ ທີ່ມີຢູ່ໃນສາງ ໂດຍແຍກເປັນແຕ່ລະປະເພດໄມ້;
   - ບັນຊີລາຍການໄມ້ ທີ່ປຸງແຕ່ງແລ້ວ;
     - ຢັ້ງຢືນຄວາມຖືກຕ້ອງຂອງໄມ້ແປຮູບຄ້າງສາງ ໂດຍການຕີລາຄາກຳນົດເປີເຊັນໄມ້ທ່ອນ ອອກເປັນ ໄມ້ແປຮູບ, ຄິດໄລ່ ໄມ້ທ່ອນເຂົ້າເລື່ອຍ ເປັນໄມ້ແປຮູບ, ເອົາຈຳນວນໄມ້ແປຮູບ ມາສົມທຽບ ໃສ່ບັນຊີໄມ້ແປຮູບຢູ່ສາງ ແລະ ບັນຊີໄມ້ແປຮູບ ທີ່ຈຳໜ່າຍອອກ ຫຼື ເອົາເຂົ້າຜະລິດເປັນ ເຄິ່ງສຳເລັດຮູບ;
     - ຢັ້ງຢືນຄວາມຖືກຕ້ອງ ສຳລັບໄມ້ສຳເລັດຮູບຄ້າງສາງ ໂດຍການຕີລາຄາ ກຳນົດເປີເຊັນໄມ້ແປຮູບ ອອກເປັນໄມ້ເຄິ່ງສຳເລັດຮູບ, ຄິດໄລ່ໄມ້ແປຮູບເຂົ້າປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ, ເອົາຈຳນວນ ໄມ້ສຳເລັດຮູບ ມາສົມທຽບໃສ່ ບັນຊີໄມ້ສຳເລັດຮູບ ຢູ່ສາງ ແລະ ບັນຊີໄມ້ສຳເລັດຮູບ ທີ່ຈຳໜ່າຍອອກ.
3. ການບັນທຶກໄມ້ ທີ່ນຳອອກຈາກສາງ ເພື່ອເຂົ້າສູ່ຂະບວນການປຸງແຕ່ງໄມ້:
   - ບັນຊີລາຍການໄມ້ ທີ່ນຳອອກຈາກໂຮງງານປຸງແຕ່ງໄມ້ ໂດຍແຍກເປັນແຕ່ລະປະເພດໄມ້;
   - ເອກະສານຢັ້ງຢືນການຊື້-ຂາຍໄມ້ ໂດຍແຍກເປັນແຕ່ລະປະເພດໄມ້ ແລະ ລະບຸແຈ້ງຂາຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.
4. ການບັນທຶກໄມ້ອອກຈາກໂຮງງານປຸງແຕ່ງໄມ້.

**ມາດຕາ 23 (ປັບປຸງ) ກວດກາໄມ້ ສົ້ນເຂົ້າ-ສົ້ນອອກ ຢູ່ຮ້ານຂາຍໄມ້ ແລະ ສາງເກັບມ້ຽນໄມ້**

ກວດກາໄມ້ ສົ້ນເຂົ້າ-ສົ້ນອອກ ຢູ່ຮ້ານຂາຍໄມ້ ແລະ ສາງເກັບມ້ຽນໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເອກະສານຕິດຕາມໄມ້ສົ້ນເຂົ້າ ປະກອບມີ:
   - ບັນຊີລາຍການໄມ້ ທີ່ນຳເຂົ້າຂອງຮ້ານຂາຍໄມ້, ສາງເກັບມ້ຽນໄມ້ ໂດຍແຍກເປັນແຕ່ລະປະເພດໄມ້;
   - ເອກະສານ ຢັ້ງຢືນ ແຫຼ່ງທີ່ມາຂອງໄມ້;
   - ເອກະສານ ກ່ຽວກັບ ການຊື້-ຂາຍໄມ້.
2. ເອກະສານຕິດຕາມໄມ້ຄ້າງ ຂອງຮ້ານຂາຍໄມ້, ສາງເກັບມ້ຽນໄມ້ ປະກອບມີ:
   - ບັນຊີລາຍການໄມ້ ທີ່ມີຢູ່ສາງ ຫຼື ສະໜາມທ້ອນໂຮມ ຂອງຜູ້ຄ້າໄມ້ ໂດຍແຍກເປັນແຕ່ລະປະເພດໄມ້;
   - ບັນຊີລາຍການໄມ້ສູນເສຍ ຫຼື ນຳໃຊ້ບໍ່ໄດ້.
3. ເອກະສານຕິດຕາມໄມ້ສົ້ນອອກ ປະກອບມີ:
   - ບັນຊີລາຍການໄມ້ ທີ່ນຳອອກຂອງຮ້ານຂາຍໄມ້, ສາງເກັບມ້ຽນໄມ້ ໂດຍແຍກເປັນແຕ່ລະປະເພດໄມ້;
   - ເອກະສານ ຢັ້ງຢືນ ການຊື້-ຂາຍໄມ້ ໂດຍແຍກເປັນແຕ່ລະປະເພດໄມ້;
   - ສົມທຽບ ຈຳນວນໄມ້, ບໍລິມາດໄມ້, ຊະນິດໄມ້ ທີ່ນຳເຂົ້າຮ້ານຂາຍໄມ້, ສາງເກັບມ້ຽນໄມ້ ກັບ ບັນຊີໄມ້ຈຳໜ່າຍ ແລະ ບັນຊີໄມ້ຄ້າງສາງ.

4. ການບັນທຶກໄມ້ອອກຈາກຮ້ານຂາຍໄມ້ ແລະ ສາງເກັບມ້ຽນໄມ້.

**ມາດຕາ 24 ການກວດກາ ການຄ້າຂາຍ ເຄື່ອງຈັກຊຸດຄົ້ນໄມ້**

ການກວດກາ ການຄ້າຂາຍ ເຄື່ອງຈັກຊຸດຄົ້ນໄມ້ ໃຫ້ປະຕິບັດ ດັ່ງນີ້:

1. ໃບທະບຽນວິສາຫະກິດ;
2. ໃບອະນຸຍາດດຳເນີນກິດຈະການ;
3. ໃບອະນຸຍາດນຳເຂົ້າສິນຄ້າ;
4. ໃບຢັ້ງຢືນການເສຍອາກອນ;
5. ບັນຊີລາຍການສິນຄ້າເຄື່ອງຈັກຊຸດຄົ້ນໄມ້ທີ່ເກືອດຫ້າມ ສົມທຽບໃສ່ກັບ ໃບອະນຸຍາດນຳເຂົ້າ.

## ໝວດທີ 3
## ການກວດກາ ການບຸກລຸກທີ່ດິນປ່າໄມ້

**ມາດຕາ 25 (ປັບປຸງ) ການກວດກາ ການບຸກລຸກທີ່ດິນປ່າໄມ້ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ການກວດກາ ການບຸກລຸກທີ່ດິນປ່າໄມ້ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ກວດກາ ດັ່ງນີ້:

1. ໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສິດນຳໃຊ້ຕາມປະເພນີ;
2. ໃບຢັ້ງຢືນການເສຍຄ່າອາກອນຊົມໃຊ້;
3. ຂອບເຂດທີ່ດິນ.

**ມາດຕາ 26 ການກວດກາ ການຫັນປ່ຽນທີ່ດິນປ່າໄມ້**

ການກວດກາ ການຫັນປ່ຽນທີ່ດິນປ່າໄມ້ ໃຫ້ກວດກາ ດັ່ງນີ້:

1. ມະຕິຕົກລົງ ຫຼື ຂໍ້ຕົກລົງ ແລະ ສິດຂອບເຂດ ຂອງການອະນຸມັດ ຫັນປ່ຽນທີ່ດິນປ່າໄມ້;
2. ລັກສະນະການຫັນປ່ຽນທີ່ດິນປ່າໄມ້;
3. ຈຳນວນເນື້ອທີ່ດິນ ທີ່ອະນຸມັດໃຫ້ຫັນປ່ຽນ ແລະ ເນື້ອທີ່ຕົວຈິງ ທີ່ຫັນປ່ຽນ.

**ມາດຕາ 27 ການກວດກາ ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້**

ການກວດກາ ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ໃຫ້ກວດກາ ດັ່ງນີ້:

1. ມະຕິຕົກລົງ ຫຼື ຂໍ້ຕົກລົງ ແລະ ສິດຂອບເຂດ ຂອງການອະນຸມັດ ຫັນປ່ຽນທີ່ດິນປ່າໄມ້;
2. ບົດວິພາກເສດຖະກິດ-ເຕັກນິກ;
3. ການປະຕິບັດສັນຍາເຊົ່າ ຫຼື ສຳປະທານ;
4. ຈຳນວນເນື້ອທີ່ດິນປ່າໄມ້ ທີ່ອະນຸມັດໃຫ້ເຊົ່າ ຫຼື ສຳປະທານ ແລະ ເນື້ອທີ່ຕົວຈິງ;
5. ການຈ່າຍຄ່າເຊົ່າ ຫຼື ສຳປະທານ, ການຈ່າຍຄ່າການບໍລິການທາງດ້ານວິຊາການ, ຄ່າປັບໜ້າດິນ, ຄ່າປູກຕົ້ນໄມ້, ຄ່າຟື້ນຟູປ່າທົດແທນຄືນ ແລະ ຄ່າທຳນຽມອື່ນ;
6. ຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ.

## ໝວດທີ 4
## ການກວດກາເຄື່ອງປ່າຂອງດົງ

**ມາດຕາ 28 ການກວດກາ ການຊຸດຄົ້ນ ແລະ ເກັບຊື້ ເຄື່ອງປ່າຂອງດົງ**

ການກວດກາ ການຊຸດຄົ້ນ ແລະ ເກັບຊື້ ເຄື່ອງປ່າຂອງດົງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄື່ອງປ່າຂອງດົງທີ່ເກີດຕາມທຳມະຊາດ;

- ຂໍ້ມູນການສຳຫຼວດກ່ອນການຂຸດຄົ້ນ;
- ແຜນອະນຸມັດການຂຸດຄົ້ນ ແລະ ເກັບກູ້ເຄື່ອງປ່າຂອງດົງ;
- ໃບອະນຸຍາດຂຸດຄົ້ນ ຫຼື ເກັບຊື້ ເຄື່ອງປ່າຂອງດົງ ຈາກຂະແໜງການກະສິກຳ ແລະ ປ່າໄມ້;
- ຂອບເຂດອະນຸຍາດໃນແຜນ ແລະ ຂອບເຂດຂຸດຄົ້ນຕົວຈິງ;
- ການປະຕິບັດສັນຍາຂຸດຄົ້ນ ແລະ ເກັບກູ້;
- ເຕັກນິກໃນການຂຸດຄົ້ນ ແລະ ເກັບກູ້.

2. ເຄື່ອງປ່າຂອງດົງທີ່ປູກ ແມ່ນໃຫ້ກວດກາ ທະບຽນສວນປູກ ທີ່ໄດ້ຮັບການຢັ້ງຢືນຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເທົ່ານັ້ນ.

**ມາດຕາ 29 ການກວດກາ ການເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ**

ການກວດກາ ການເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ;
2. ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງພາຍໃນ, ສຳລັບເຄື່ອງປ່າຂອງດົງທີ່ປູກ ຕ້ອງໄດ້ຮັບການຢັ້ງຢືນຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
3. ບົດບັນທຶກການກວດກາ ກ່ຽວກັບ ຈຳນວນ, ຊະນິດ, ນ້ຳໜັກ ຂອງເຄື່ອງປ່າຂອງດົງ ທີ່ເຄື່ອນຍ້າຍພາຍໃນ;
4. ໃບຮັບເງິນຄ່າຊັບພະຍາກອນ;
5. ໃບຢັ້ງຢືນການເສຍອາກອນ;
6. ປະເພດ, ສີ, ຍີ່ຫໍ້, ທະບຽນ ຂອງພາຫະນະຂົນສົ່ງເຄື່ອງປ່າຂອງດົງທີ່ກຳນົດໃນເອກະສານ ສົມທຽບ ໃສ່ລົດຂົນສົ່ງຕົວຈິງ.

**ມາດຕາ 30 ການກວດກາ ການສົ່ງອອກ ເຄື່ອງປ່າຂອງດົງ**

ການກວດກາ ການສົ່ງອອກ ເຄື່ອງປ່າຂອງດົງ ໄປຕ່າງປະເທດ ໃຫ້ປະຕິບັດ ດັ່ງນີ້:

1. ເຄື່ອງປ່າຂອງດົງທີ່ເກີດຕາມທຳມະຊາດ
   - ບົດບັນທຶກ ການກວດກາ ຂອງຄະນະກຳມະການ;
   - ໃບອະນຸຍາດເຄື່ອນຍ້າຍອອກຕ່າງປະເທດ ຂອງຂະແໜງການ ກະສິກຳ ແລະ ປ່າໄມ້ ສົມທຽບຈຳນວນ, ນ້ຳໜັກ, ຊະນິດ ເຄື່ອງປ່າຂອງດົງ ທີ່ລະບຸໃນເອກະສານ ແລະ ຕົວຈິງ;
   - ການຢັ້ງຢືນການຊຳລະຄ່າພັນທະ, ອາກອນ;
   - ໃບແຈ້ງລາຄາສິນຄ້າ (Invoice and Packing List);
   - ໃບຢັ້ງຢືນ CITES (ກໍລະນີ ເຄື່ອງປ່າຂອງດົງນອນໃນບັນຊີ CITES)
   - ປະເພດ, ສີ, ຍີ່ຫໍ້, ທະບຽນ ຂອງພາຫະນະຂົນສົ່ງ ທີ່ກຳນົດໃນເອກະສານ ສົມທຽບໃສ່ລົດຂົນສົ່ງຕົວຈິງ.
2. ເຄື່ອງປ່າຂອງດົງທີ່ປູກ
   - ໃບທະບຽນວິສາຫະກິດ;
   - ໃບອະນຸຍາດ ດຳເນີນກິດຈະການຂອງໂຮງງານ;
   - ການຈົດທະບຽນ ສັນຍາຊື້-ຂາຍ;
   - ໃບຢັ້ງຢືນ ການເສຍອາກອນ;
   - ສັນຍາ ຊື້-ຂາຍວັດຖຸດິບເຄື່ອງປ່າຂອງດົງ;
   - ໃບທະບຽນປ່າປູກ ຫຼື ໃບຢັ້ງຢືນເຄື່ອງປ່າຂອງດົງທີ່ປູກ;
   - ໃບແຈ້ງລາຄາສິນຄ້າ (Invoice and Packing List);
   - ໃບຢັ້ງຢືນ CITES (ກໍລະນີ ເຄື່ອງປ່າຂອງດົງນອນໃນບັນຊີ CITES);

- ປະເພດ, ສີ, ຍີ່ຫໍ້, ທະບຽນ ຂອງພາຫະນະຂົນສົ່ງ ທີ່ກຳນົດໃນເອກະສານ ສົມທຽບໃສ່ລົດຂົນສົ່ງຕົວຈິງ.

**ມາດຕາ 31 ການກວດກາ ການນຳເຂົ້າ ແລະ ສົ່ງຜ່ານ ເຄື່ອງປ່າຂອງດົງ**

ການກວດກາ ການນຳເຂົ້າ ແລະ ສົ່ງຜ່ານ ເຄື່ອງປ່າຂອງດົງ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດສົ່ງອອກ ຫຼື ສົ່ງຜ່ານ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ຈາກຂະແໜງການກ່ຽວຂ້ອງ ຂອງປະເທດຕົ້ນທາງ;
2. ໃບຄຳຮ້ອງຂໍນຳເຂົ້າ ຫຼື ສົ່ງຜ່ານ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ຂອງບໍລິສັດ;
3. ສຳເນົາເອກະສານວິສາຫະກິດ ຫຼື ໃບທະບຽນສຳປະທານ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບ ວິສາຫະກິດ ທີ່ຢູ່ ສປປ ລາວ), ໃບທະບຽນ ວິສາຫະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບ ກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ໃນ ສປປ ລາວ);
4. ບັນຊີເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ;
5. ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ແລະ ປາຍທາງ (ກໍລະນີ ເຄື່ອງປ່າຂອງດົງທີ່ນອນໃນບັນຊີ CITES);
6. ໃບອະນຸຍາດນຳເຂົ້າ ຫຼື ສົ່ງຜ່ານ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ.

**ມາດຕາ 32 (ປັບປຸງ) ການກວດກາ ໂຮງງານ ຫຼື ສະຖານທີ່ປຸງແຕ່ງ ເຄື່ອງປ່າຂອງດົງ, ໄມ້ປ່ອງ, ຢາງພາລາ, ໂຮງງານ ຫຼື ເຕົາເຜົາຖ່ານ**

ການກວດກາ ໂຮງງານ ຫຼື ສະຖານທີ່ປຸງແຕ່ງ ເຄື່ອງປ່າຂອງດົງ, ໄມ້ປ່ອງ, ຢາງພາລາ, ໂຮງງານ ຫຼື ເຕົາເຜົາຖ່ານ ໃຫ້ປະຕິບັດ ດັ່ງນີ້:

1. ໃບອະນຸຍາດສ້າງຕັ້ງໂຮງງານ ຫຼື ສັນຍາເຊົ່າໂຮງງານ;
2. ໃບຮັບອະນຸຍາດ ຈາກຂະແໜງການສາທາລະນະສຸກ ສຳລັບພືດເປັນຢາ;
3. ບົດວິພາກເສດຖະກິດ-ເຕັກນິກ;
4. ໃບອະນຸຍາດດຳເນີນກິດຈະການ ກະສິກຳ ແລະ ປ່າໄມ້;
5. ໃບທະບຽນວິສາຫະກິດ;
6. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
7. ໃບຢັ້ງຢືນ ດ້ານສິ່ງແວດລ້ອມ-ສັງຄົມ;
8. ໃບຢັ້ງຢືນມອບພັນທະ, ອາກອນ.

**ມາດຕາ 33 (ປັບປຸງ) ການກວດກາເຄື່ອງປ່າຂອງດົງ ສົ້ນເຂົ້າ-ສົ້ນອອກ ຢູ່ໂຮງງານ ຫຼື ສະຖານທີ່ປຸງແຕ່ງ ເຄື່ອງປ່າຂອງດົງ, ໄມ້ປ່ອງ, ໂຮງງານ ຫຼື ເຕົາເຜົາຖ່ານ**

ການກວດກາເຄື່ອງປ່າຂອງດົງ ສົ້ນເຂົ້າ-ສົ້ນອອກ ຢູ່ໂຮງງານ ຫຼື ສະຖານທີ່ປຸງແຕ່ງ ເຄື່ອງປ່າຂອງດົງ, ໄມ້ປ່ອງ, ໂຮງງານ ຫຼື ເຕົາເຜົາຖ່ານ ໃຫ້ປະຕິບັດຕາມຂັ້ນຕອນລະອຽດ ດັ່ງນີ້:

1. ການບັນທຶກເຄື່ອງປ່າຂອງດົງ, ໄມ້ປ່ອງ ແລະ ໄມ້ເພື່ອນຳມາຜະລິດຖ່ານ ທີ່ນຳເຂົ້າມາໃນໂຮງງານ;
   - ບັນຊີນຳເຂົ້າ;
   - ເອກະສານຢັ້ງຢືນແຫຼ່ງທີ່ມາ;
   - ເອກະສານຢັ້ງຢືນການເສຍຄ່າພັນທະ, ອາກອນຕ່າງໆ.
     - ຢັ້ງຢືນຄວາມຖືກຕ້ອງຂອງເຄື່ອງປ່າຂອງດົງ ຄ້າງໂຮງງານ ໂດຍການ ສົມທຽບຈຳນວນ, ນ້ຳໜັກ, ຊະນິດເຄື່ອງປ່າຂອງດົງ ເຂົ້າໂຮງງານ ກັບບັນຊີເຄື່ອງປ່າຂອງດົງ ທີ່ນຳເຂົ້າໄປປຸງແຕ່ງ ແລະ ເຄື່ອງປ່າຂອງດົງ ຄ້າງສາງ.
2. ການບັນທຶກ ຜະລິດຕະພັນເຄື່ອງປ່າຂອງດົງ, ໄມ້ປ່ອງ, ຖ່ານ ທີ່ຄ້າງສາງ;
   - ລາຍການຜະລິດຕະພັນເຄື່ອງປ່າຂອງດົງ, ໄມ້ປ່ອງ, ຖ່ານ ທີ່ມີຢູ່ໃນສາງ ໂດຍແຍກເປັນແຕ່ລະປະເພດ;

- ລາຍການເຄື່ອງປ່າຂອງດົງ ທີ່ປຸງແຕ່ງແລ້ວ.
  - ຢັ້ງຢືນຄວາມຖືກຕ້ອງຂອງຜະລິດຕະພັນເຄື່ອງປ່າຂອງດົງ ດ້າງສາງ ໂດຍການຕີລາຄາ ກຳນົດເປີເຊັນເຄື່ອງປ່າຂອງດົງ ອອກເປັນ ຜະລິດຕະພັນເຄື່ອງປ່າຂອງດົງ, ຄິດໄລ່ ເຄື່ອງປ່າຂອງດົງ ເປັນຜະລິດຕະພັນເຄື່ອງປ່າຂອງດົງ, ເອົາຈຳນວນຜະລິດຕະພັນເຄື່ອງປ່າຂອງດົງ ມາລົມທຽບໃສ່ ບັນຊີເຄື່ອງປ່າຂອງດົງ ຢູ່ສາງ ແລະ ບັນຊີເຄື່ອງປ່າຂອງດົງ ທີ່ຈຳໜ່າຍອອກ.

3. ການບັນທຶກ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ທີ່ນຳອອກຈາກໂຮງງານ;
   - ບັນຊີລາຍການເຄື່ອງປ່າຂອງດົງ ທີ່ນຳອອກຈາກໂຮງງານປຸງແຕ່ງ ໂດຍແຍກເປັນແຕ່ລະປະເພດ;
   - ເອກະສານຢັ້ງຢືນການຊື້-ຂາຍເຄື່ອງປ່າຂອງດົງ ໂດຍແຍກເປັນແຕ່ລະປະເພດ ແລະ ລະບຸແຈ້ງ ຂາຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

## ໝວດທີ 5
## ການກວດກາສັດນ້ຳ ແລະ ສັດປ່າ

**ມາດຕາ 34 ການກວດກາ ສັດນ້ຳ ແລະ ສັດປ່າ ຢູ່ ສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ການຂະຫຍາຍພັນສັດນ້ຳ ແລະ ສັດປ່າ**

ການກວດກາ ສັດນ້ຳ ແລະ ສັດປ່າ ຢູ່ ສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ການຂະຫຍາຍພັນສັດນ້ຳ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ບົດວິພາກເສດຖະກິດ-ເຕັກນິກ;
2. ໃບອະນຸຍາດສ້າງຕັ້ງຕາມຂອບເຂດສິດ;
3. ໃບອະນຸຍາດດຳເນີນກິດຈະການ ຂອງຂະແໜງການກະສິກຳ ແລະ ປ່າໄມ້;
4. ໃບຢັ້ງຢືນແຫຼ່ງທີ່ມາຂອງສັດນ້ຳ ແລະ ສັດປ່າ;
5. ໃບຢັ້ງຢືນການຂຶ້ນທະບຽນສັດນ້ຳ ແລະ ສັດປ່າ;
6. ບັນຊີລາຍຊື່ສັດນ້ຳ ແລະ ສັດປ່າ;
7. ໃບແຈ້ງບັນຊີ ການປ່ຽນແປງຈຳນວນສັດນ້ຳ ແລະ ສັດປ່າ ປະຈຳປີ ໂດຍຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ, ເທດສະບານ ແລະ ນະຄອນ;
8. ໃບຢັ້ງຢືນ ກ່ຽວກັບ ການຂະຫຍາຍພັນ ແລະ ການລ້ຽງ;
9. ໃບຢັ້ງຢືນ ປອດພະຍາດສັດ;
10. ກວດກາຄືນການປະຕິບັດສັນຍາເຊົ່າສັດນ້ຳ ແລະ ສັດປ່າ ອອກຕ່າງປະເທດ.

**ມາດຕາ 35 ການກວດກາ ການຊື້-ຂາຍ ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນ້ຳ ແລະ ສັດປ່າ**

ການກວດກາ ການຊື້-ຂາຍ ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນ້ຳ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ໃບຢັ້ງຢືນ ການຊື້-ຂາຍ ຈາກເຈົ້າຂອງຟາມ ຫຼື ເຈົ້າຂອງສວນສັດ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
2. ໃບຢັ້ງຢືນການສັກຢາກັນພະຍາດຂອງສັດຕະວະແພດແຂວງ ຫຼື ນະຄອນຫຼວງ;
3. ແຫຼ່ງທີ່ມາຂອງ ສັດນ້ຳ ແລະ ສັດປ່າ;
4. ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບ ສັດນ້ຳ ແລະ ສັດປ່າ;
5. ໃບຢັ້ງຢືນການຂະຫຍາຍພັນສັດ;
6. ບັນຊີ ສັດນ້ຳ ແລະ ສັດປ່າ;
7. ຕະຫຼາດ, ຮ້ານອາຫານ ແລະ ສະຖານທີ່ອື່ນໆ.

**ມາດຕາ 36 ການກວດກາ ການເຄື່ອນຍ້າຍສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ**

ການກວດກາ ການເຄື່ອນຍ້າຍສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ໃບອະນຸຍາດເຄື່ອນຍ້າຍ;
2. ແຫຼ່ງທີ່ມາຂອງສັດນໍ້າ, ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ;
3. ໃບອະນຸຍາດດໍາເນີນກິດຈະການ ກ່ຽວກັບ ສັດນໍ້າ ແລະ ສັດປ່າ;
4. ໃບທະບຽນວິສາຫະກິດ;
5. ໃບຢັ້ງຢືນ ກ່ຽວກັບ ການຂະຫຍາຍພັນ ແລະ ການລ້ຽງ;
6. ໃບຢັ້ງຢືນການເສຍພັນທະ, ອາກອນ;
7. ບັນຊີ ສັດນໍ້າ ແລະ ສັດປ່າ;
8. ໃບຢັ້ງຢືນປອດພະຍາດສັດ;
9. ບົດບັນທຶກການກວດກາຂອງຄະນະກໍາມະການ.

**ມາດຕາ 37 ກວດກາ ການມີໄວ້ຄອບຄອງສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ**

ການກວດກາ ການມີໄວ້ຄອບຄອງສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ, ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ໃບຢັ້ງຢືນແຫຼ່ງທີ່ມາ
2. ໃບຢັ້ງຢືນກໍາມະສິດສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນສັດນໍ້າ ແລະ ສັດປ່າ, ຜະລິດຕະພັນສັດນໍ້າ ແລະ ສັດປ່າ.

**ມາດຕາ 38 ການກວດກາ ການນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ**

ການກວດກາ ການນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ໃບອະນຸຍາດນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ ຈາກກະຊວງກ່ຽວຂ້ອງ ຂອງປະເທດຕົ້ນທາງ;
2. ໃບຄໍາຮ້ອງຂໍນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າຂອງບໍລິສັດ;
3. ສໍາເນົາເອກະສານວິສາຫະກິດ ຫຼື ໃບທະບຽນສໍາປະທານ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສໍາລັບ ວິສາຫະກິດ ທີ່ຢູ່ ສປປ ລາວ), ໃບທະບຽນວິສາຫະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສໍາລັບວິສາຫະກິດທີ່ບໍ່ຢູ່ໃນ ສປປ ລາວ);
4. ບັນຊີສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ;
5. ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ແລະ ປາຍທາງ (ກໍລະນີ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່ານອນໃນບັນຊີ CITES);
6. ໃບອະນຸຍາດນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນໍ້າ ແລະ ສັດປ່າ;
7. ໃບຢັ້ງຢືນປອດພະຍາດສັດ;
8. Invoice and Packing list ຈາກປະເທດຕົ້ນທາງ;
9. ໃບແຈ້ງພາສີ (ໃບເສຍພາສີຍ່ອຍ ຫຼື ໃບ ບໍ 44);
10. ໃບເຄື່ອນຍ້າຍສິນຄ້າສົ່ງອອກ ຫຼື ໃບ ບໍ 81.

**ມາດຕາ 39 ການກວດກາ ການລ່າສັດປ່າ ແລະ ຫາສັດນ້ຳ**

ການກວດກາ ການລ່າສັດປ່າ ແລະ ຫາສັດນ້ຳ ໃຫ້ກວດກາ ດັ່ງນີ້:

1. ລາດຕະເວນ ໃນ ແລະ ນອກ ສາມປະເພດປ່າ;
2. ການນຳໃຊ້ເຄື່ອງມືລ່າ ສັດນ້ຳ ແລະ ສັດປ່າ ທີ່ເກືອດຫ້າມ ເຊັ່ນ: ປືນທຸກຊະນິດ, ລະເບີດ, ທາດເຄມີ, ທາດເບື່ອ , ແສງ ຫຼື ສຽງທຽມ, ແຮ້ວ, ເຄື່ອງຊ໋ອດໄຟຟ້າ ແລະ ອື່ນໆ.

**ມາດຕາ 40 ການກວດກາ ການຂາຍເຄື່ອງມືລ່າສັດນ້ຳ ແລະ ສັດປ່າ**

ການກວດກາ ການຂາຍເຄື່ອງມືລ່າສັດນ້ຳ ແລະ ສັດປ່າ ໃຫ້ກວດກາ ດັ່ງນີ້:

1. ໃບທະບຽນວິສາຫະກິດ;
2. ໃບອະນຸຍາດດຳເນີນກິດຈະການ;
3. ໃບອະນຸຍາດນຳເຂົ້າສິນຄ້າ;
4. ໃບຢັ້ງຢືນການເສຍອາກອນ;
5. ບັນຊີລາຍການສິນຄ້າທີ່ເກືອດຫ້າມ ທີ່ໄດ້ລະບຸໃສ່ ມາດຕາ 34 ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສົມທຽບ ໃສ່ກັບໃບອະນຸຍາດນຳເຂົ້າ.

## ໝວດທີ 6
## ການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້

**ມາດຕາ 41 ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ**

ພົບເຫັນຮ່ອງຮອຍຂອງການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 130, 131, 311, 312, 326, 327, 328, 329, 331, 332, 333, 334, 335, 336, 337, 338 ແລະ 353 ຂອງປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017 ໂດຍອີງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ຮ່ອງຮອຍຂອງ ການກະທຳຜິດ ໄດ້ມາຈາກການລົງກວດກາ ແລະ ເກັບກຳຂໍ້ມູນຂອງເຈົ້າໜ້າທີ່ປ່າໄມ້ ຊຶ່ງໄດ້ຮັບ ແຫຼ່ງຂໍ້ມູນ ດັ່ງນີ້:

a. ມີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ການກະທຳຜິດ ຕໍ່ກົດໝາຍວ່າດ້ວຍ ປ່າໄມ້, ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ;

2. ມີການເຂົ້າມອບຕົວຂອງຜູ້ກະທຳຜິດ;
3. ພົບເຫັນຮ່ອງຮອຍຂອງການກະທຳຜິດ.

**ມາດຕາ 42 ຄຳສັ່ງເປີດການສືບສວນ-ສອບສວນ**

ພາຍຫຼັງທີ່ໄດ້ຜ່ານການຄົ້ນຄວ້າ ຕາມມາດຕາ 41 ຂອງຂໍ້ຕົກລົງສະບັບນີ້ ເຈົ້າໜ້າທີ່ປ່າໄມ້ ຮ່າງຄຳສັ່ງເປີດການ ສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ ໃນແບບຟອມຄຳສັ່ງເປີດການສືບສວນ-ສອບສວນ; ການເປີດ ການສືບສວນ-ສອບສວນ ດຳເນີນໃນ 2 ກໍລະນີ ຄື:

1. ຄຳສັ່ງເປີດການສືບສວນ-ສອບສວນ ໃສ່ເຫດການຂອງການກະທຳຜິດ ໃນກໍລະນີທີ່ພົບຮ່ອງຮອຍການກະທຳ ຜິດແຕ່ບໍ່ທັນສາມາດຮູ້ວ່າບຸກຄົນໃດ ເປັນຜູ້ກະທຳຜິດ;
2. ຄຳສັ່ງເປີດການສືບສວນ-ສອບສວນ ໃສ່ບຸກຄົນຜູ້ກະທຳຜິດ ໃນກໍລະນີທີ່ຮູ້ຈັກບຸກຄົນຜູ້ກະທຳຜິດ.

ເມື່ອໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນ ຫຼື ມີການປ່ຽນແປງ, ເພີ່ມເຕີມເນື້ອໃນ ຕ້ອງລາຍງານໃຫ້ ຫົວໜ້າອົງການໄອຍະການປະຊາຊົນ ເພື່ອຊາບ ແລະ ຕິດຕາມກວດກາ ພາຍໃນ 24 ຊົ່ວໂມງ.

**ມາດຕາ 43 ຄຳສັ່ງບໍ່ເປີດການສືບສວນ-ສອບສວນ**

ສາເຫດທີ່ພາໃຫ້ບໍ່ເປີດການສືບສວນ-ສອບສວນ ເນື່ອງຈາກບໍ່ມີຄວາມຜິດທາງອາຍາ, ຂໍ້ມູນບໍ່ຄົບຖ້ວນ, ບໍ່ພຽງພໍ ຕາມເງື່ອນໄຂທີ່ໄດ້ກຳນົດໃນ ມາດຕາ 41 ຂອງຂໍ້ຕົກລົງສະບັບນີ້ ແຕ່ຕ້ອງແຈ້ງໃຫ້ຜູ້ລາຍງານຊາບ.

ຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນ ນັ້ນ ຄູ່ຄວາມຝ່າຍໂຈດ ແລະ ຈຳເລີຍ ສາມາດຂໍອຸທອນຕໍ່ໄອຍະການປະຊາຊົນຂັ້ນເທິງຖັດນັ້ນໄດ້ ພາຍໃນກຳນົດ 7 ວັນ ນັບແຕ່ມື້ຮັບຊາບຄຳສັ່ງນັ້ນ ເປັນຕົ້ນໄປ.

**ມາດຕາ 44 ກຳນົດເວລາດຳເນີນການສືບສວນ-ສອບສວນ**

ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບຜົນຂອງການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີພ້ອມດ້ວຍຂອງກາງ ສົ່ງໃຫ້ອົງການໄອຍະການປະຊາຊົນ ພາຍໃນກຳນົດ 2 ເດືອນ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ;

ຖ້າບໍ່ສຳເລັດ ກ່ອນຄຳສັ່ງຈະໝົດກຳນົດ 15 ວັນ ຕ້ອງສະເໜີຫາ ຫົວໜ້າອົງການໄອຍະການປະຊາຊົນ ເພື່ອພິຈາລະນາອະນຸມັດສືບຕໍ່;

ໃນກໍລະນີ ມີຄວາມຈຳເປັນຕ້ອງໄດ້ສືບຕໍ່ ແຕ່ອົງການໄອຍະການປະຊາຊົນບໍ່ອະນຸມັດໃຫ້ສືບຕໍ່ດຳເນີນການສືບສວນ-ສອບສວນ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງສະເໜີຫາອົງການໄອຍະການປະຊາຊົນຂັ້ນຖັດໄປ ເພື່ອພິຈາລະນາ.

**ມາດຕາ 45 ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ**

ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ດັ່ງນີ້:

1. ການເອົາຄຳໃຫ້ການ;
2. ການກວດຄົ້ນ, ການຍຶດ ຫຼື ອາຍັດຊັບ;
3. ການຊັນນະສູດສະຖານທີ່ເກີດເຫດ, ການແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທຳການພິສູດ ແລະ ການທົດສອບຂໍ້ມູນຄືນໃໝ່;
4. ມາດຕະການສະກັດກັ້ນ;
5. ການໂຈະ, ການຊັດມ້ຽນ ແລະ ການສິ້ນສຸດການສືບສວນ-ສອບສວນ.

**ມາດຕາ 46 ການອອກໝາຍຮຽກ**

ການອອກໝາຍຮຽກ ຕ້ອງປະຕິບັດ ດັ່ງນີ້:

1. ກ່ອນອອກໝາຍຮຽກ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງໄດ້ກວດກາຫຼັກຖານຜູກມັດທາງ ດ້ານວັດຖຸ, ບຸກຄົນ ໃຫ້ຮັດກຸມ ແລ້ວຈຶ່ງອອກໝາຍຮຽກ ຜູ້ຖືກຫາ ມາສືບສວນ-ສອບສວນ;
2. ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ແຕ່ລະຂັ້ນ ເປັນຜູ້ອອກໝາຍຮຽກ (ສຳລັບຂັ້ນເມືອງແມ່ນ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເປັນຜູ້ອອກໝາຍຮຽກ);
3. ການອອກໝາຍຮຽກ ໃຫ້ປະຕິບັດຕາມແບບພິມ ທີ່ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ໄດ້ກຳນົດ.
4. ເນື້ອໃນຂອງໝາຍຮຽກ ໃຫ້ກຳນົດແຈ້ງ ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ບ້ານຢູ່ປະຈຸບັນ ຂອງຜູ້ຖືກຫາ, ຂໍ້ກ່າວຫາ ແລະ ກຳນົດແຈ້ງສະຖານທີ່, ວັນເວລາ, ເຈົ້າໜ້າທີ່ຮັບຜິດຊອບສືບສວນ-ສອບສວນ.
5. ການສົ່ງໝາຍຮຽກຕ້ອງສົ່ງໃຫ້ຜູ້ຖືກຫາ ໂດຍແຈ້ງໃຫ້ອົງການປົກຄອງບ້ານຮັບຮູ້ ຫຼື ສົ່ງໃຫ້ຄະນະບ້ານ ນຳເອົາໄປໃຫ້ຜູ້ຖືກຫາ ໂດຍການເຊັນຮັບໝາຍຮຽກ, ກຳນົດສົ່ງໝາຍຮຽກຕ້ອງສົ່ງກ່ອນມື້ນັດໝາຍ ຢ່າງໜ້ອຍ 3 ວັນ , ສຳລັບເຂດຫ່າງໄກສອກຫຼີກ ຢ່າງໜ້ອຍ 5 ວັນ;
6. ໃນກໍລະນີຜູ້ຖືກຫາ ບໍ່ມາຕາມໝາຍຮຽກ ຄັ້ງທີໜຶ່ງ, ຄັ້ງທີສອງ ແລະ ຄັ້ງທີສາມ ຍັງບໍ່ມາ ໃຫ້ຫົວໜ້າອົງການສືບສວນ-ສອບຂອງເຈົ້າໜ້າທີ່ປ່າໄມ້ ອອກຄຳສັ່ງພາຕົວຜູ້ຖືກຫາ.

**ມາດຕາ 47 ການເອົາຄຳໃຫ້ການຜູ້ຖືກຫາ**

ການເອົາຄຳໃຫ້ການຜູ້ຖືກຫາ ໃຫ້ປະຕິບັດ ດັ່ງນີ້:

1. ແຈ້ງຂໍ້ກ່າວຫາ ພ້ອມທັງສິດ ແລະ ພັນທະຜູ້ຖືກຫາ, ຖ້າວ່າມີຜູ້ປົກປ້ອງອື່ນ ຫຼື ຜູ້ແປພາສາ ເຂົ້າຮ່ວມ ກໍຕ້ອງແຈ້ງສິດ ແລະ ພັນທະໃຫ້ຜູ້ກ່ຽວຊາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65, 71 ແລະ 74 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
2. ໃຫ້ເອົາຄຳໃຫ້ການເທື່ອລະຄົນ ແລະ ຕ້ອງເຮັດບົດບັນທຶກຄຳໃຫ້ການ, ຜູ້ຖືກຫາຈະຂຽນຄຳໃຫ້ການດ້ວຍຕົນເອງກໍໄດ້, ການເອົາຄຳໃຫ້ການແຕ່ລະເທື່ອບໍ່ໃຫ້ເກີນ 4 ຊົ່ວໂມງ;
3. ການເອົາຄຳໃຫ້ການແຕ່ລະຄັ້ງ ເຈົ້າໜ້າທີ່ປ່າໄມ້ທີ່ເຂົ້າຮ່ວມຕ້ອງໃສ່ເຄື່ອງແບບ ແລະ ບໍ່ໃຫ້ຫຼຸດ 3 ຄົນ ເພື່ອເຮັດໜ້າທີ່ ສືບສວນ-ສອບສວນ, ບັນທຶກ ແລະ ສັງເກດການ;
4. ເຈົ້າໜ້າທີ່ປ່າໄມ້ ຕ້ອງເອົາຄຳໃຫ້ການຜູ້ຖືກຫາໃນທັນໃດ ພາຍຫຼັງໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນໃສ່ຜູ້ກ່ຽວແລ້ວ, ຖ້າຫາກວ່າ ການເອົາຄຳໃຫ້ການຜູ້ຖືກຫານັ້ນ ຫາກບໍ່ສາມາດດຳເນີນໄດ້ໃນທັນໃດ ຕ້ອງເຮັດບົດບັນທຶກ ພ້ອມດ້ວຍເຫດຜົນ;
5. ບໍ່ອະນຸຍາດໃຫ້ເອົາຄຳໃຫ້ການໃນເວລາກາງຄືນ ເວັ້ນເສຍແຕ່ໃນກໍລະນີຈຳເປັນ ຫຼື ຮີບດ່ວນ ແຕ່ຕ້ອງແຈ້ງເຫດຜົນໄວ້ໃນບົດບັນທຶກການເອົາຄຳໃຫ້ການ;
6. ບໍ່ອະນຸຍາດ ໃຫ້ດຳເນີນດ້ວຍການຕົວະຍົວະ, ບັງຄັບ, ນາບຂູ່, ທຸບຕີ ຫຼື ທໍລະມານ, ຖ້າຫາກມີການລະເມີດກໍຈະຖືກດຳເນີນຄະດີອາຍາ ແລະ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ເນື່ອງມາຈາກການລະເມີດນັ້ນຕາມກົດໝາຍ;
7. ການເອົາຄຳໃຫ້ການຂອງເດັກ ທີ່ຍັງບໍ່ທັນເຖິງອາຍຸ 18 ປີ, ຄົນຫູໜວກຕາບອດ, ປາກກືກ, ປັນຍາອ່ອນ, ເສຍຈິດ ຊຶ່ງບໍ່ສາມາດປະຕິບັດສິດຂອງຕົນໄດ້ນັ້ນ ຕ້ອງມີການເຂົ້າຮ່ວມຂອງພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຕາມກົດໝາຍ;
8. ການເອົາຄຳໃຫ້ການຂອງພະຍານຫຼາຍຄົນ ໃຫ້ດຳເນີນໄປເທື່ອລະຄົນ ແລະ ແຍກພະຍານກັບຜູ້ຖືກຫາ ພ້ອມທັງບໍ່ອະນຸຍາດໃຫ້ພວກກ່ຽວສົນທະນາກັນ, ສຳລັບພະຍານທີ່ເປັນເດັກ, ຄົນຫູໜວກຕາບອດ, ປາກກືກ ແລະ ຄົນປັນຍາອ່ອນ, ເສຍຈິດ ທີ່ຖືກອ້າງເປັນພະຍານນັ້ນ ຕ້ອງເຊີນພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຕາມກົດໝາຍ ເຂົ້າຮ່ວມນຳ;
9. ໃນກໍລະນີຄຳໃຫ້ການບໍ່ກົງກັນ ຕ້ອງດຳເນີນການສອບຖາມຊ້ອງໜ້າ ໃນແຕ່ລະເທື່ອນັ້ນບໍ່ໃຫ້ເກີນ 2 ຄົນ, ກ່ອນສອບຖາມຊ້ອງໜ້າ ຕ້ອງແຈ້ງສິດ, ພັນທະ, ຄວາມຮັບຜິດຊອບ ໃນການປະຕິເສດ ຫຼື ໃຫ້ການເທັດ, ສອບຖາມສາຍກ່ຽວພັນ ຂອງຜູ້ເຂົ້າຮ່ວມຊ້ອງໜ້າດ້ວຍກັນ ແລະ ຕ້ອງແຈ້ງບັນຫາ ທີ່ຕ້ອງການຄວາມກະຈ່າງແຈ້ງໃຫ້ກັນຊາບ, ພາຍຫຼັງໄດ້ຟັງຄຳໃຫ້ການແລ້ວ ອາດຈະສືບຕໍ່ສອບຖາມ ຜູ້ເຂົ້າຮ່ວມແຕ່ລະຄົນ;
10. ໃນກໍລະນີ ທີ່ຈຳເປັນ ຕ້ອງໃຫ້ພະຍານ ຫຼື ຜູ້ຖືກເສຍຫາຍ ໃຫ້ການ ກ່ຽວກັບ ສະພາບທີ່ຕົນໄດ້ພົບເຫັນ ພ້ອມທັງບອກຕຳນິ, ຮູບປະພັນ, ຈຸດພິເສດຕ່າງໆຂອງບຸກຄົນ, ວັດຖຸສິ່ງຂອງ ຫຼື ຂອງກາງ ແລະ ຊີ້ຕົວຜູ້ຖືກຫາ ແລະ ຢັ້ງຢືນຂອງກາງ. ໃນການຊີ້ຕົວ ແລະ ຢັ້ງຢືນຂອງກາງ ຕ້ອງເອົາບຸກຄົນ ຫຼື ຂອງກາງ ທີ່ຈະຖືກຊີ້ຕົວ ຫຼື ຢັ້ງຢືນມາຮ່ວມກັບບຸກຄົນອື່ນ ຫຼື ຂອງກາງອື່ນ ຢ່າງນ້ອຍ 3 ຄົນ ຫຼື 3 ຢ່າງ ທີ່ມີຮູບຮ່າງຄ້າຍຄືກັນ. ສຳລັບການຊີ້ຕົວບຸກຄົນ ຕ້ອງຮັບປະກັນຄວາມລັບ ແລະ ຄວາມປອດໄພໃຫ້ຜູ້ກ່ຽວ;
11. ການເອົາຄຳໃຫ້ການແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 100 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 48 ການກວດຄົ້ນ**

ການກວດຄົ້ນ ໃຫ້ປະຕິບັດ ດັ່ງນີ້:

1. ການກວດຄົ້ນເຄຫາສະຖານ:
   - ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງສະເໜີ ຂໍຄຳສັ່ງກວດຄົ້ນ ຈາກອົງການໄອຍະການປະຊາຊົນ (ຍົກເວັ້ນການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ ພາຍຫຼັງການກວດຄົ້ນ ແລ້ວ ຕ້ອງໄດ້ລາຍງານ

ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແລະ ອົງການໄອຍະການປະຊາຊົນ ພາຍໃນ 24 ຊົ່ວໂມງ);

- ໄດ້ຮັບຄຳສັ່ງກວດຄົ້ນຈາກອົງການໄອຍະການປະຊາຊົນ ແລ້ວ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແຕ່ງຕັ້ງຄະນະຮັບຜິດຊອບກວດຄົ້ນເຄຫາສະຖານ;
- ການດຳເນີນການກວດຄົ້ນ: ແຈ້ງຄຳສັ່ງການກວດຄົ້ນ, ສິດ ແລະ ພັນທະ ຂອງຜູ້ກວດຄົ້ນ ແລະ ຜູ້ຖືກກວດຄົ້ນ ໂດຍຊ້ອງໜ້າອົງການປົກຄອງບ້ານ ແລະ ເຈົ້າຂອງເຄຫາສະຖານທີ່ຈະກວດຄົ້ນ, ກວດຄົ້ນຕາມເປົ້າໝາຍ ແລະ ເອົາຄຳໃຫ້ການຂອງເຈົ້າຂອງເຄຫາສະຖານ.
- ສະຫຼຸບລາຍງານຜົນຂອງການກວດຄົ້ນໃຫ້ ອົງການໄອຍະການປະຊາຊົນຮັບຊາບ ພາຍໃນ 24 ຊົ່ວໂມງ.

2. ການກວດຄົ້ນຍານພາຫະນະ ແລະ ຕົວບຸກຄົນ ບໍ່ຈຳເປັນມີຄຳສັ່ງຂອງອົງການໄອຍະການປະຊາຊົນ ແລະ ບໍ່ໄດ້ຊ້ອງໜ້າອົງການປົກຄອງບ້ານ ພາຍຫຼັງສຳເລັດ ໃຫ້ສະຫຼຸບລາຍງານຜົນຂອງການກວດຄົ້ນ ໃຫ້ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້. ສຳລັບຂັ້ນຕອນການກວດຄົ້ນແມ່ນ ໃຫ້ປະຕິບັດຄືກັນກັບການກວດຄົ້ນເຄຫາສະຖານ.

- ການກວດຄົ້ນເຄຫາສະຖານ, ກວດຄົ້ນຍານພາຫະນະ ແລະ ຕົວບຸກຄົນ ທຸກຄັ້ງຕ້ອງໄດ້ຂຶ້ນບັນຊີຂອງກາງ (ຖ້າມີ) ແລະ ເຮັດບົດບັນທຶກຕາມແບບພິມ ທີ່ໄດ້ກຳນົດໃນຄູ່ມືການດຳເນີນຄະດີຂອງເຈົ້າໜ້າທີ່ປ່າໄມ້.

**ມາດຕາ 49 ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ**

ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ ໃຫ້ປະຕິບັດ ດັ່ງນີ້:

1. ໃນເວລາກວດຄົ້ນ ເຈົ້າໜ້າທີ່ສາມາດຍຶດວັດຖຸສິ່ງຂອງ ຫຼື ເອກະສານທີ່ເປັນຫຼັກຖານຂອງກາງຄະດີ ເອົາໄປເກັບ ຮັກສາໄວ້ບ່ອນທີ່ປອດໄພ;
2. ໃນກໍລະນີວັດຖຸບໍ່ສາມາດເຄື່ອນຍ້າຍໄດ້ແມ່ນ ໃຫ້ເຮັດບົດບັນທຶກອາຍັດໄວ້ກັບທີ່ ແລ້ວມອບໃຫ້ອົງການປົກຄອງບ້ານ ແລະ ຄອບຄົວ ທີ່ກ່ຽວຂ້ອງ ປົກປັກຮັກສາ;
3. ລາຍງານ ແລະ ສະເໜີຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ເພື່ອພິຈາລະນາ ແລະ ອອກຄຳສັ່ງ ຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ ທີ່ພົວພັນກັບຄະດີ.

**ມາດຕາ 50 ການຊັນນະສູດສະຖານທີ່ເກີດເຫດ**

ການຊັນນະສູດສະຖານທີ່ເກີດເຫດ ໃນຄະດີ ກ່ຽວກັບ ໄມ້, ຊັບພະຍາກອນປ່າໄມ້ ໃຫ້ປະຕິບັດ ດັ່ງນີ້:

1. ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານສອບສວນ ມີສິດນຳຕົວຜູ້ຖືກສົງໄສ ຫຼື ຜູ້ຖືກຫາ, ຮຽກຜູ້ຖືກເສຍຫາຍ, ພະຍານ ຢ່າງໜ້ອຍ ສອງຄົນ ແລະ ເຊີນຜູ້ຊ່ຽວຊານ, ໃນກໍລະນີຈຳເປັນ ຕ້ອງເຊີນໄອຍະການປະຊາຊົນ, ອົງການປົກຄອງບ້ານ ທີ່ກ່ຽວຂ້ອງເຂົ້າຮ່ວມທຳການຊັນນະສູດສະຖານທີ່ ເກີດເຫດນຳ;
2. ການຊັນນະສູດສະຖານທີ່ເກີດເຫດ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານສອບສວນ ຕ້ອງກຳນົດ ແລະ ແຕ້ມແຜນວາດສະຖານທີ່ເກີດເຫດ, ເກັບກຳເອົາວັດຖຸສິ່ງຂອງ ທີ່ພົວພັນກັບການກະທຳຜິດ, ເອົາຮ່ອງຮອຍການກະທຳຜິດ, ສົມທຽບຮ່ອງຮອຍການກະທຳຜິດກັບວັດຖຸຕົວຈິງ (ຮອຍລໍ້, ຮອຍຈັກຕັດໄມ້), ຖ່າຍຮູບໄວ້ ແລະ ເຮັດບົດບັນທຶກຢັ້ງຢືນການຊັນນະສູດ;
3. ການຊັນນະສູດສະຖານທີ່ເກີດເຫດ ອາດຈະເຮັດຂຶ້ນກ່ອນ ຫຼື ຫຼັງການເປີດການສືບສວນ-ສອບສວນ ກໍໄດ້;
4. ການຊັນນະສູດສະຖານທີ່ເກີດເຫດ ຕ້ອງດຳເນີນໃນເວລາກາງເວັນ ແຕ່ຫົກໂມງເຊົ້າ ຫາ ຫົກໂມງແລງ ເວັ້ນເສຍແຕ່ໃນກໍລະນີ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນເທົ່ານັ້ນ. ໃນກໍລະນີທີ່ການຊັນນະສູດສະຖານທີ່ເກີດເຫດ ຫາກບໍ່ທັນສິ້ນສຸດກໍໃຫ້ສືບຕໍ່ໄປຈົນກວ່າສຳເລັດ.

**ມາດຕາ 51 ການແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທຳການພິສູດ**

ໃນກໍລະນີຈຳເປັນທີ່ຕ້ອງການພິສູດ ໄມ້ ຫຼື ຊາກສັດ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສາມາດແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທີ່ໄດ້ຜ່ານການຮັບຮອງຈາກສະຖາບັນກ່ຽວຂ້ອງ ເພື່ອທຳການພິສູດ ໂດຍກຳນົດ ເວລາ ພິສູດ, ສິດ ແລະ ພັນທະຂອງຜູ້ຖືກແຕ່ງຕັ້ງ.

ພາຍຫຼັງສຳເລັດການຊັນນະສູດແລ້ວ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຕ້ອງເຮັດບົດສະຫຼຸບຜົນການຊັນນະສູດ ພ້ອມທັງໃຫ້ຄຳເຫັນຂອງຕົນສົ່ງໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕາມກຳນົດເວລາທີ່ໄດ້ຮັບມອບໝາຍ.

**ມາດຕາ 52 ການທົດສອບຂໍ້ມູນຄືນໃໝ່**

ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສາມາດທຳການທົດສອບຂໍ້ມູນຄືນໃໝ່ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ຈາກການສືບສວນ-ສອບສວນ ໂດຍໃຫ້ ຜູ້ຖືກຫາ ຫຼື ຈຳເລີຍ ສະແດງການກະທຳຂອງຕົນຄືນໃໝ່ ພ້ອມທັງຖ່າຍຮູບ, ວັດແທກ ແລະ ແຕ້ມແຜນວາດປະກອບ.

**ມາດຕາ 53 ການທ້ອນໂຮມ ແລະ ການເກັບຮັກສາຂອງກາງ**

ການທ້ອນໂຮມ ແລະ ການເກັບຮັກສາຂອງກາງ ໃຫ້ປະຕິບັດ ດັ່ງນີ້:

1. ການດຳເນີນຄະດີ ຢູ່ຂັ້ນໃດ ແມ່ນຂັ້ນນັ້ນ ເປັນຜູ້ຮັບຜິດຊອບຄຸ້ມຄອງຂອງກາງ.
2. ການເກັບຮັກສາຂອງກາງ
   - ຂຶ້ນບັນຊີຂອງກາງລະອຽດ;
   - ຂອງກາງທີ່ສາມາດເຄື່ອນຍ້າຍໄດ້ ຕ້ອງໄດ້ເຄື່ອນຍ້າຍໄປເກັບມ້ຽນໃນສະຖານທີ່ປອດໄພ ແລະ ເໝາະສົມ;
   - ຂອງກາງທີ່ບໍ່ສາມາດເຄື່ອນຍ້າຍໄດ້ ຕ້ອງມອບໃຫ້ອົງການປົກຄອງບ້ານ ເປັນຜູ້ຄຸ້ມຄອງ ຮັກສາ ແຕ່ຕ້ອງຮັບປະກັນ ຄວາມປອດໄພ;
   - ສຳລັບຂອງກາງ ທີ່ເປັນສັດ ແລະ ຍັງມີຊີວິດ ຕ້ອງໄດ້ນຳໄປ ຮັກສາຢູ່ສູນຟື້ນຟູ ຫຼື ນຳໄປປ່ອຍຄືນສູ່ ທຳມະຊາດ, ຖ້າເປັນຊາກ ຫຼື ຊິ້ນສ່ວນໃຫ້ເກັບຮັກສາໄວ້ຕູ້ແຊ່, ສຳລັບຊິ້ນສ່ວນຜະລິດຕະພັນ ໃຫ້ເກັບຮັກສາໄວ້ຕູ້ເຊັບ;
   - ຂອງກາງທີ່ເປັນເງິນຕາ, ເງິນຕາຕ່າງປະເທດ, ເຊັກ ຫຼື ພັນທະບັດອື່ນ, ວັດຖຸທີ່ມີຄ່າ ຕ້ອງເອົາໄປຝາກໄວ້ນຳທະນາຄານ ຕາມລະບຽບການ;
   - ຂອງກາງທີ່ເປັນສິ່ງບູດເນົ່າ ຫຼື ເສື່ອມຄຸນໄວນັ້ນ ໃຫ້ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ແຕ່ງຕັ້ງຄະນະກຳມະການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.
3. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳເອົາຂອງກາງໄປໃຊ້, ເຮັດໃຫ້ເປ່ເພ, ຕົກເຮ່ເສຍຫາຍ, ສັບປ່ຽນ ຫຼື ຍັກຍອກເອົາ ຊຶ່ງຜູ້ລະເມີດຈະຖືກຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 383 ແລະ 384 ຂອງປະມວນກົດໝາຍອາຍາ.

## ໝວດທີ 7
## ມາດຕະການສະກັດກັ້ນ ທີ່ນຳໃຊ້ເຂົ້າໃນການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້

**ມາດຕາ 54 ມາດຕະການສະກັດກັ້ນ ທີ່ນຳໃຊ້ເຂົ້າໃນການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້**

ເພື່ອສະກັດກັ້ນການກະທຳຜິດຢ່າງທັນການ ຫຼື ເມື່ອມີຂໍ້ມູນ ຫຼື ຫຼັກຖານທີ່ພາໃຫ້ເຊື່ອໝັ້ນວ່າ ຜູ້ຖືກຫາ ຫຼື ຈຳເລີຍ ຈະສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສືບສວນ-ສອບສວນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ນັ້ນ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີສິດນຳໃຊ້ມາດຕະການສະກັດກັ້ນ ຕົ້ນຕໍ ດັ່ງນີ້:

1. ການພາຕົວ;
2. ການກັກຕົວ;
3. ການຈັບຕົວ;
4. ການຄຸມຕົວຢູ່ກັບທີ່;
5. ການງົດຕຳແໜ່ງ ຫຼື ໜ້າທີ່ຜູ້ຖືກຫາ.

ນອກຈາກມາດຕະການສະກັດກັ້ນຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ແລ້ວ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຍັງມີສິດສະເໜີອົງການໄອຍະການປະຊາຊົນ ເພື່ອພິຈາລະນາ ກັກຂັງພາງ ຫຼື ປ່ອຍຕົວພາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 142 ແລະ 143 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 55 ການພາຕົວ**

ໃນກໍລະນີ ຜູ້ຖືກສົງໄສ, ຜູ້ຖືກຫາທີ່ບໍ່ຖືກກັກຂັງພາງ, ພະຍານ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງ ໄດ້ຮັບ ໝາຍຮຽກ ສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ມີສິດອອກຄຳສັ່ງພາຕົວຜູ້ກ່ຽວ ຍົກເວັ້ນແມ່ຍິງຖືພາມານ ຫຼື ຄົນເຈັບປ່ວຍທີ່ບໍ່ສາມາດອອກຈາກ ສະຖານທີ່ຕາມການຢັ້ງຢືນຈາກຄະນະແພດ.

ກ່ອນຈະພາຕົວ ເຈົ້າໜ້າທີ່ປ່າໄມ້ ຕ້ອງສົມທົບກັບອົງການປົກຄອງບ້ານ ອ່ານຄຳສັ່ງຊ້ອງໜ້າຜູ້ຖືກພາຕົວຊາບ ແລ້ວພາຕົວໄປ ແຕ່ບໍ່ໃຫ້ໃສ່ກລັບມື ແລະ ໃຫ້ດຳເນີນໃນເວລາ ຫົກໂມງ ຫາ ສິບແປດໂມງ ເວັ້ນເສຍແຕ່ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ຈະເອົາຕົວຫຼົບໜີ ຫຼື ບໍ່ມີທີ່ຢູ່ອັນແນ່ນອນ.

**ມາດຕາ 56 ການກັກຕົວ**

ເມື່ອເອົາຄຳໃຫ້ການຂອງຜູ້ຖືກສົງໄສແລ້ວ ຫາກມີຂໍ້ມູນຫຼັກຖານໜັກແໜ້ນວ່າຜູ້ກ່ຽວໄດ້ກະທຳຜິດ ແລະ ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ, ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສາມາດອອກຄຳສັ່ງກັກຕົວຜູ້ກ່ຽວ ພາຍໃນ ສີ່ສິບແປດຊົ່ວໂມງ ເພື່ອດຳເນີນການສືບສວນ-ສອບສວນ ໂດຍເລີ່ມຈາກການອ່ານຄຳສັ່ງ ກັກຕົວ, ສິດ ແລະ ພັນທະຂອງຜູ້ຖືກກັກຕົວ ພ້ອມທັງແຈ້ງຄອບຄົວຜູ້ກ່ຽວ ແລະ ລາຍງານໃຫ້ອົງການໄອຍະການປະຊາຊົນ ຊາບພາຍໃນ ຊາວສີ່ຊົ່ວໂມງ ນັບແຕ່ວັນກັກຕົວເປັນຕົ້ນໄປ;

ພາຍໃນ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາອອກຄຳສັ່ງກັກຕົວເປັນຕົ້ນໄປ ເຈົ້າໜ້າທີ່ປ່າໄມ້ ຕ້ອງລົງຄຳເຫັນໃດໜຶ່ງດັ່ງນີ້:

1. ຖ້າຫາກເຫັນວ່າບໍ່ມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ-ສອບສວນໄດ້ນັ້ນ ເຈົ້າໜ້າທີ່ປ່າໄມ້ ຕ້ອງຂໍຄຳສັ່ງປ່ອຍຕົວຈາກຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແລ້ວປ່ອຍຕົວຜູ້ຖືກກັກຕົວ ພ້ອມທັງລາຍງານເປັນລາຍລັກອັກສອນ ໃຫ້ອົງການໄອຍະການປະຊາຊົນ ຊາບໃນທັນໃດ;
2. ຖ້າຫາກເຫັນວ່າມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄຳສັ່ງເປີດການສືບສວນ-ສອບສວນໄດ້ ແລະ ຖ້າຫາກເຫັນວ່າມີຄວາມຈຳເປັນຕ້ອງທຳການກັກຂັງພາງແລ້ວ ເຈົ້າໜ້າທີ່ປ່າໄມ້ ຕ້ອງສະເໜີຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ອອກຄຳສັ່ງເປີດການສືບສວນ-ສອບສວນ ພ້ອມທັງສະເໜີຂໍຄຳສັ່ງກັກຂັງພາງ ຈາກອົງການໄອຍະການປະຊາຊົນ.

**ມາດຕາ 57 ການຈັບຕົວ**

ການຈັບຕົວບຸກຄົນໃດໜຶ່ງ ຕ້ອງມີຄຳສັ່ງຈັບຕົວເປັນລາຍລັກອັກສອນ ຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານ ເວັ້ນເສຍແຕ່ກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 140 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ເຈົ້າໜ້າທີ່ປ່າໄມ້ ມີສິດກັກຕົວໄດ້ໃນທັນໃດ ແຕ່ຕ້ອງລາຍງານໃຫ້ອົງການໄອຍະການປະຊາຊົນ ຊາບ ພາຍໃນ ຊາວສີ່ຊົ່ວໂມງ;

ການຈັບຕົວແຕ່ລະຄັ້ງ ເຈົ້າໜ້າທີ່ປ່າໄມ້ ຕ້ອງອ່ານຄຳສັ່ງຈັບຕົວ, ຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກຈັບຕົວຊາບ ກ່ອນດຳເນີນການເອົາຄຳໃຫ້ການ ແລະ ລົງຄຳເຫັນວ່າຈະປ່ອຍຕົວ ຫຼື ກັກຂັງພາງ ພາຍໃນ ສີ່ສິບແປດຊົ່ວໂມງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃນກໍລະນີທີ່ເຫັນວ່າຄວນປ່ອຍຕົວ ຫຼື ຕ້ອງກັກຂັງພາງແລ້ວ ຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານສອບສວນ ຕ້ອງຂໍຄຳສັ່ງປ່ອຍຕົວ ຫຼື ຄຳສັ່ງກັກຂັງພາງຈາກອົງການໄອຍະການປະຊາຊົນ;
2. ໃນກໍລະນີທີ່ບໍ່ແມ່ນເຈົ້າໜ້າທີ່ສືບສວນ-ສອບສວນ ທຳການຈັບຕົວນັ້ນ ຕ້ອງນຳຜູ້ຖືກຈັບຕົວໄປມອບໃຫ້ ເຈົ້າໜ້າທີ່ສືບສວນ-ສອບສວນໃນທັນໃດ. ສຳລັບການຈັບຕົວຢູ່ຫ່າງໄກສອກຫຼີກນັ້ນ ໃຫ້ນຳຕົວຜູ້ຖືກຈັບຕົວ ໄປມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ພາຍໃນກຳນົດ ເຈັດວັນ ນັບແຕ່ມື້ຈັບຕົວ ເປັນຕົ້ນໄປ;
3. ການຈັບຕົວຕ້ອງດຳເນີນໄປດ້ວຍວິທີ ແລະ ຮູບການອັນເໝາະສົມກັບລັກສະນະຂອງການກະທຳຜິດ ແລະ ຜູ້ຖືກຈັບຕົວ, ຫ້າມທຸບຕີທໍລະມານຜູ້ຖືກຈັບຕົວ;
4. ການຈັບຕົວບໍ່ວ່າຈະແມ່ນກໍລະນີໃດ ກໍຕ້ອງແຈ້ງໃຫ້ຄອບຄົວ, ສຳນັກງານ, ອົງການ ຫຼື ວິສາຫະກິດທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກຳນົດ ຊາວສີ່ຊົ່ວໂມງຢ່າງຊ້າ ແລະ ຕ້ອງແຈ້ງສະຖານທີ່ກັກຂັງພ້ອມ ຖ້າຫາກວ່າ ບໍ່ເປັນອຸປະສັກໃນການດຳເນີນຄະດີ;
5. ການຈັບຕົວກໍລະນີໃດກໍຕາມ ເຈົ້າໜ້າທີ່ປ່າໄມ້ ຕ້ອງສ້າງບົດບັນທຶກການຈັບຕົວຕາມແບບພິມທີ່ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນສູນກາງ ກຳນົດໃນແຕ່ລະໄລຍະ.

### ມາດຕາ 58 ການຄຸມຕົວຢູ່ກັບທີ່

ໃນກໍລະນີທີ່ມີການເກັບກຳຂໍ້ມູນຫຼັກຖານ ແລະ ການເອົາຄຳໃຫ້ການຂອງຜູ້ຖືກຫາແລ້ວ ເຫັນວ່າຜູ້ກ່ຽວມີການເຄື່ອນໄຫວຂົ່ມຂູ່ພະຍານ, ສ້າງ ຫຼື ທຳລາຍຫຼັກຖານ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງອອກຄຳສັ່ງຄຸມຕົວກັບທີ່ ໂດຍແຈ້ງໃຫ້ອົງການປົກຄອງບ້ານບ່ອນຜູ້ຖືກຫາອາໄສຢູ່ ເປັນຜູ້ຄຸ້ມຄອງ ແລະ ຕິດຕາມ ຈົນກວ່າມີຄຳສັ່ງຍົກເລີກ, ໃນກໍລະນີຜູ້ຖືກຫາຫາກລະເມີດຄຳສັ່ງຄຸມຕົວກັບທີ່ ອາດຈະໃຊ້ມາດຕະການສະກັດກັ້ນອື່ນ ທີ່ໜັກກວ່າເກົ່າໃສ່ຜູ້ກ່ຽວ.

### ມາດຕາ 59 ການງົດຕຳແໜ່ງ ຫຼື ໜ້າທີ່ຜູ້ຖືກຫາ

ໃນກໍລະນີສືບສວນ-ສອບສວນ ເຈົ້າໜ້າທີ່, ພະນັກງານ ທີ່ມີຕຳແໜ່ງ ແລະ ໜ້າທີ່ທາງບໍລິຫານ ຫາກມີຄວາມຫຍຸ້ງຍາກ ແລະ ມີຄວາມຈຳເປັນຈະຕ້ອງໄດ້ງົດໜ້າທີ່ຕຳແໜ່ງ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງສະເໜີຫົວໜ້າອົງການໄອຍະການປະຊາຊົນ ພິຈາລະນາອອກຄຳສັ່ງງົດໜ້າທີ່ ຫຼື ຕຳແໜ່ງ ແລະ ສະເໜີຕໍ່ອົງການຈັດຕັ້ງຜູ້ຖືກຫາສັງກັດຢູ່ ເພື່ອພິຈາລະນາງົດໜ້າທີ່ ຫຼື ຕຳແໜ່ງ.

## ໝວດທີ 8
## ການໂຈະ, ການຊັດມ້ຽນ ແລະ ການສິ້ນສຸດການສືບສວນ-ສອບສວນ ຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້

### ມາດຕາ 60 ການໂຈະການສືບສວນ-ສອບສວນ

ການໂຈະການສືບສວນ-ສອບສວນໃຫ້ປະຕິບັດ ດັ່ງນີ້:

1. ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກ, ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ ຫົວໜ້າອົງການສືບສວນ-ສອບສວນ ອອກຄຳສັ່ງໂຈະການສືບສວນ-ສອບສວນໄດ້ ໃນເມື່ອໝົດເວລາຂອງການສືບສວນ-ສອບສວນ ແລະ ໄດ້ຂໍຄຳສັ່ງຈັບໂຕຈາກອົງການໄອຍະການປະຊາຊົນ;
2. ບໍ່ສາມາດຮູ້ໄດ້ວ່າແມ່ນ ຜູ້ໃດເປັນຜູ້ກະທຳຜິດ ຫົວໜ້າອົງການສືບສວນ-ສອບສວນ ອອກຄຳສັ່ງໂຈະການສືບສວນ-ສອບສວນໄດ້ ໃນເມື່ອໝົດເວລາຂອງການສືບສວນ-ສອບສວນ;

3. ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດ ຫົວໜ້າອົງການສືບສວນ-ສອບສວນ ອອກຄຳສັ່ງໂຈະການສືບສວນ-ສອບສວນໄດ້ ກໍຕໍ່ເມື່ອມີການຢັ້ງຢືນຈາກຄະນະແພດ ແລະ ຕ້ອງອອກຄຳສັ່ງສົ່ງຕົວຜູ້ກ່ຽວໄປປິ່ນປົວ;
4. ຄຳສັ່ງໂຈະການສືບສວນ-ສອບສວນ ຕ້ອງໃຫ້ອັດສຳເນົາ ແລ້ວສົ່ງລາຍງານໃຫ້ອົງການໄອຍະການປະຊາຊົນຊາບໃນທັນໃດ;
5. ຄະດີທີ່ໄດ້ໂຈະການສືບສວນ-ສອບສວນ ໄວ້ນັ້ນ ກໍຈະຖືກຊັດມ້ຽນ ເມື່ອຫາກໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;
6. ຄຳສັ່ງໂຈະ ແລະ ຄຳສັ່ງຊັດມ້ຽນຄະດີ ຕ້ອງແຈ້ງໃຫ້ຄູ່ຄວາມຊາບ ຊຶ່ງຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງມີສິດຂໍອຸທອນພາຍໃນກຳນົດ ເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງນັ້ນ ເປັນຕົ້ນໄປ.

ເມື່ອສາເຫດຂອງການໂຈະການສືບສວນ-ສອບສວນ ຫາກຕົກໄປ ແລະ ອາຍຸຄວາມໃນການຮ້ອງຟ້ອງຍັງບໍ່ທັນສິ້ນສຸດ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງອອກຄຳສັ່ງສືບຕໍ່ດຳເນີນການສືບສວນ-ສອບສວນ ຄະດີທີ່ຖືກໂຈະໄວ້ນັ້ນຄືນໃໝ່.

**ມາດຕາ 61 ການຊັດມ້ຽນຄະດີ**

ການຊັດມ້ຽນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້ ແມ່ນມີສາເຫດ ດັ່ງນີ້:

1. ຂາດສາເຫດການກະທຳຜິດທາງອາຍາ;
2. ຂາດອົງປະກອບການກະທຳຜິດທາງອາຍາ;
3. ໝົດອາຍຸຄວາມການຮ້ອງຟ້ອງການກະທຳຜິດທາງອາຍາ;
4. ມີການນິລະໂທດກຳ;
5. ມີການກະທຳຜິດທາງດ້ານວັດຖຸທີ່ຕໍ່າກວ່າມູນຄ່າຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ;
6. ຜູ້ກະທຳຜິດໄດ້ເສຍຊີວິດ;
7. ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ເດັດຂາດແລ້ວ ກ່ຽວກັບ ຄະດີດຽວກັນ.

ໃນກໍລະນີທີ່ມີການຊັດມ້ຽນຄະດີ ຫົວໜ້າອົງການສືບສວນ-ສອບສວນ ລາຍງານຫາອົງການໄອຍະການປະຊາຊົນຮັບຊາບ ພ້ອມທັງສົ່ງສິ່ງຂອງຕິດຕົວ ທີ່ຖືກຕ້ອງຕາມກົດໝາຍ ລວມທັງວັດຖຸສິ່ງຂອງທີ່ໄດ້ຍຶດເປັນຂອງກາງ ຊຶ່ງເປັນກຳມະສິດຂອງຜູ້ກ່ຽວຄືນໃນທັນໃດ.

**ມາດຕາ 62 ການສືບຕໍ່ດຳເນີນຄະດີ**

ໃນກໍລະນີມີຫຼັກຖານໃໝ່ ແລະ ອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ຍັງບໍ່ສິ້ນສຸດ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີສິດອອກຄຳສັ່ງລົບລ້າງ ຄຳສັ່ງຊັດມ້ຽນຄະດີດັ່ງກ່າວ ແລ້ວສັ່ງໃຫ້ສືບຕໍ່ການສືບສວນ-ສອບສວນຄືນໃໝ່ ແລ້ວລາຍງານອົງການໄອຍະການປະຊາຊົນຊາບໃນທັນໃດ.

ກໍລະນີຄະດີຖືກສັ່ງຟ້ອງຂຶ້ນສານແລ້ວ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສະເໜີໃຫ້ອົງການໄອຍະການປະຊາຊົນ ອອກຄຳສັ່ງ ລົບລ້າງຄຳສັ່ງຊັດມ້ຽນຄະດີດັ່ງກ່າວ ແລ້ວສັ່ງໃຫ້ສືບຕໍ່ການສືບສວນ-ສອບສວນ ຄືນໃໝ່.

**ມາດຕາ 63 ການສິ້ນສຸດການສືບສວນ-ສອບສວນ**

ການສືບສວນ-ສອບສວນ ຈະສິ້ນສຸດລົງໄດ້ ກໍຕໍ່ເມື່ອ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສາມາດສະຫຼຸບເຫດການ, ມີຫຼັກຖານຢັ້ງຢືນເຖິງການລະເມີດ, ມີຄວາມເຫັນ ກ່ຽວກັບ ການສືບສວນ-ສອບສວນ, ມີມາດຕະການສະກັດກັ້ນທີ່ໄດ້ປະຕິບັດຜ່ານມາ, ສາມາດຮັບໂຮມຂອງກາງຄະດີ, ມີເຫດຜົນ ແລະ ພື້ນຖານ ທີ່ພາໃຫ້ມີການສັ່ງຟ້ອງ ແລ້ວຈຶ່ງປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ກຳນົດພາຍໃນ 3 ວັນ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ຫົວໜ້າກົມກວດກາປ່າໄມ້ ໃນຖານະຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີໜ້າທີ່ຊີ້ນຳການຈັດຕັ້ງປະຕິບັດຂອງກອງກວດກາປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຈົ່ງພ້ອມກັນຊຸກຍູ້ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 65 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ຂອງລັດຖະມົນຕີ ສະບັບເລກທີ 0141/ກປ, ລົງວັນທີ 18 ພະຈິກ 2010 ແລະ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດ ທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ